ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ສະພາແຫ່ງຊາດ ເລກທີ 02 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 8 ກໍລະກົດ 2009

# ກົດໝາຍ
# ວ່າດ້ວຍການສົ່ງເສີມການລົງທຶນ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ກໍານົດ ຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການສົ່ງເສີມ, ການຄຸ້ມຄອງການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ, ໄດ້ຮັບການປົກປ້ອງດ້ານຕ່າງໆຈາກລັດ, ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຂອງລັດ, ຂອງປະຊາຊົນ ແນໃສ່ເພີ່ມທະວີ ຄຸນປະໂຫຍດ ແລະ ບົດບາດການລົງທຶນ ຕໍ່ເສດຖະກິດ-ສັງຄົມຂອງຊາດ ໃຫ້ເຕີບໂຕ, ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະ ຍືນຍົງ, ປະກອບສ່ວນອັນສໍາຄັນ ເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໃຫ້ເຂັ້ມແຂງ.

**ມາດຕາ 2. ການສົ່ງເສີມການລົງທຶນ**

ການສົ່ງເສີມການລົງທຶນ ແມ່ນ ການວາງນະໂຍບາຍ, ການສ້າງສະພາບແວດລ້ອມ ແລະ ເງື່ອນໄຂ ໃນດ້ານຕ່າງໆ ແກ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອໃຫ້ຜູ້ລົງທຶນສາມາດດໍາເນີນທຸລະກິດ ຢູ່ ສປປ ລາວ ໄດ້ຢ່າງສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 3. ການອະທິບາຍຄໍາສັບ**

ຄໍາສັບຕ່າງໆ ທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການລົງທຶນ ໝາຍເຖິງ** ການທີ່ຜູ້ລົງທຶນນຳເອົາທຶນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອດຳເນີນທຸລະກິດ ຢູ່ ສ ປປ ລາວ;
2. **ຜູ້ລົງທຶນ ໝາຍເຖິງ** ບຸກຄົນ ຫລື ນິຕິບຸກຄົນພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລົງທຶນ ດຳເນີນທຸລະກິດຢູ່ ສ ປປ ລາວ;
3. **ຜູ້ລົງທຶນພາຍໃນ ໝາຍເຖິງ** ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ນິຕິບຸກຄົນຂອງກຸ່ມຄົນດັ່ງກ່າວ ທີ່ດຳລົງຊີວິດ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ;
4. **ຜູ້ລົງທຶນຕ່າງປະເທດ ໝາຍເຖິງ** ບຸກຄົນ ຫລື ນິຕິບຸກຄົນຂອງຕ່າງປະເທດທີ່ມາດຳເນີນທຸລະກິດຢູ່ ສປປ ລາວ;
5. **ທຶນທີ່ມີຕົວຕົນ ໝາຍເຖິງ** ເງິນຕາ, ສັງຫາລິມະຊັບ ແລະອະສັງຫາລິມະຊັບ;
6. **ທຶນທີ່ບໍ່ມີຕົວຕົນ ໝາຍເຖິງ** ຊັບສິນທາງປັນຍາ, ລາຍຮັບທີ່ຈະເກີດຂຶ້ນໃນອະນາຄົດ, ສິດເຊົ່າ, ສິດທາງດ້ານການຄ້າ, ມູນຄ່າການສຳປະທານ ແລະອື່ນໆ ;
7. **ການສຳປະທານ ໝາຍເຖິງ** ການທີ່ລັດອະນຸຍາດໃຫ້ນິຕິບຸກຄົນນຳໃຊ້ສິດ ໃນກຳມະສິດຕ່າງໆ ທີ່ເປັນຂອງລັດ ຕາມເງື່ອນໄຂ ແລະ ກຳນົດເວລາທີ່ແນ່ນອນ ໂດຍມີສັນຍາຢ່າງຖືກຕ້ອງ ຕາມລະບຽບກົດໝາຍ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ;
8. **ສັນຍາສຳປະທານ ໝາຍເຖິງ** ສັນຍາທີ່ ອົງການຈັດຕັ້ງຂອງລັດ ຫຼື ວິສາຫະກິດຂອງລັດທີ່ ໄດ້ຮັບມອບໝາຍຈາກລັດຖະບານ ເຊັນກັບນິຕິບຸກຄົນ ກ່ຽວກັບການສຳປະທານ;
9. **ພາຫະນະຮັບໃຊ້ການຜະລິດໂດຍກົງ ໝາຍເຖິງ** ກົນຈັກ, ລົດບັນທຸກໜັກ ແລະ ອື່ນໆທີ່ນຳໃຊ້ໂດຍກົງ ເຂົ້າໃນການດຳເນີນກິດຈະການລົງທຶນ ຕາມການກຳນົດຂອງລັດຖະບານ;
10. **ການລົງທຶນທາງກົງ ໝາຍເຖິງ** ການທີ່ຜູ້ລົງທຶນ ຫຼື ກຸ່ມຜູ້ລົງທຶນ ນຳເອົາທຶນ ໄປດຳເນີນທຸລະກິດ ຊຶ່ງເຮັດໃຫ້ຕົນເປັນເຈົ້າຂອງວິສາຫະກິດ ແລະ ຄຸ້ມຄອງບໍລິຫານ ຫຼື ຂະຫຍາຍວິສາຫະກິດທີ່ກ່ຽວຂ້ອງ;
11. **ການລົງທຶນທາງອ້ອມ ໝາຍເຖິງ** ການທີ່ຜູ້ລົງທຶນຊື້ຮຸ້ນບໍລິສັດ, ຊື້ຮຸ້ນຈາກຕະຫລາດຮຸ້ນ, ລວມທັງ ການລົງທຶນໃສ່ກອງທຶນຄ້ຳປະກັນການເງິນ, ພັນທະບັດ ແລະ ເອກະສານມີຄ່າອື່ນ ໂດຍຜູ້ລົງທຶນບໍ່ມີສ່ວນຮ່ວມໂດຍກົງ ໃນການບໍລິຫານຈັດການວິສາຫະກິດ ທີ່ກ່ຽວຂ້ອງ;
12. **ເອກະສານມີຄ່າ ໝາຍເຖິງ** ເອກະສານທີ່ສາມາດຕີມູນຄ່າເປັນເງິນ ຊຶ່ງສາມາດຊື້-ຂາຍ, ແລກປ່ຽນ ຫລື ຄ້ຳປະກັນໄດ້ ເຊັ່ນ ໃບຕາດິນ, ໃບຮຸ້ນ, ພັນທະບັດ;
13. **ເຂດເສດຖະກິດພິເສດ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດ ເພື່ອພັດທະນາໃຫ້ເປັນຕົວເມືອງໃໝ່ທີ່ທັນສະໄໝຢ່າງຮອບດ້ານ, ເປັນບ່ອນດຶງດູດ ການລົງທຶນພາຍໃນ ແລະຕ່າງປະເທດ ຊຶ່ງມີເນື້ອທີ່ແຕ່ໜຶ່ງພັນເຮັກຕາຂຶ້ນໄປ, ມີນະໂຍບາຍສົ່ງເສີມພິເສດ ແລະມີລະບົບເສດຖະກິດ–ການເງິນ ເປັນເຈົ້າຕົນເອງ, ເປັນຫົວໜ່ວຍບໍລິຫານນ້ອຍ-ສັງຄົມ

ກວ້າງ, ມີລະບົບຮັບປະກັນຄວາມສະຫງົບປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ;

14. **ເຂດເສດຖະກິດສະເພາະ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດ ໃຫ້ເປັນເຂດອຸດສາຫະກຳ, ເຂດການຜະລິດ ເພື່ອສົ່ງອອກ, ເຂດຕົວເມືອງທ່ອງທ່ຽວ, ເຂດການຄ້າປອດພາສີ, ເຂດພັດທະນາເຕັກໂນໂລຢີ ແລະ ຂໍ້ມູນຂ່າວສານ, ເຂດເສດຖະກິດຊາຍແດນ ແລະ ອື່ນໆ;

15. **ເຂດອຸດສາຫະກຳ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດອຸດສາຫະກຳ, ປຸງແຕ່ງຜະລິດຕະພັນອຸດສາຫະກຳ, ສະໜອງການບໍລິການໃຫ້ອຸດສາຫະກຳປຸງແຕ່ງ ເພື່ອສ້າງໃຫ້ເປັນນິຄົມອຸດສາຫະກຳ ດ້ວຍການພັດທະນາພື້ນຖານໂຄງລ່າງທີ່ເໝາະສົມເພື່ອຮອງຮັບການລົງທຶນ, ເນື້ອທີ່ອາດຈະບໍ່ກວ້າງ ເທົ່າກັບເຂດເສດຖະກິດພິເສດ;

16. **ເຂດການຜະລິດເພື່ອສົ່ງອອກ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດການລົງທຶນ ດ້ານການຜະລິດ, ການປຸງແຕ່ງສິນຄ້າ ແລະ ການບໍລິການ ເພື່ອສົ່ງອອກ;

17. **ເຂດຕົວເມືອງທ່ອງທ່ຽວ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດການລົງທຶນດ້ານການທ່ອງທ່ຽວ ໂດຍຕິດພັນກັບການປົກປັກຮັກສາ, ອະນຸລັກຊັບພະຍາກອນທຳມະຊາດ, ສິ່ງແວດລ້ອມ, ສິ່ງເສີມທ່າແຮງຂອງທ້ອງຖິ່ນ ແລະ ຂອງຊາດ ເພື່ອດຶງດູດການທ່ອງທ່ຽວ ແລະທັນເປັນອຸດສາຫະກຳທ່ອງທ່ຽວ ທີ່ທັນສະໄໝ ເທື່ອລະກ້າວ;

18. **ເຂດການຄ້າປອດພາສີ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດການລົງທຶນດ້ານການຄ້າ, ການແລກປ່ຽນສິນຄ້າ ລະຫວ່າງພາຍໃນ ກັບຕ່າງປະເທດ ຊຶ່ງມີນະໂຍບາຍຍົກເວັ້ນພາສີຢູ່ພາຍໃນເຂດດັ່ງກ່າວ;

19. **ເຂດພັດທະນາເຕັກໂນໂລຢີ ແລະຂໍ້ມູນຂ່າວສານ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດໃຫ້ມີການລົງທຶນເຂົ້າໃສ່ການສຶກສາ, ຄົ້ນຄວ້າ, ພັດທະນາ ແລະ ນຳໃຊ້ເຕັກໂນໂລຢີລະດັບສູງ ເພື່ອຜະລິດ ແລະ ຈຳໜ່າຍຜະລິດຕະພັນເຕັກໂນໂລຢີ, ສະໜອງ ແລະບໍລິການດ້ານຂໍ້ມູນຂ່າວສານແບບຄົບວົງຈອນ ໃຫ້ແກ່ສັງຄົມດ້ວຍຄວາມສະດວກ ແລະວ່ອງໄວ;

20. **ເຂດເສດຖະກິດຊາຍແດນ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດ ເພື່ອສົ່ງເສີມໃຫ້ມີການຊື້-ຂາຍ, ແລກປ່ຽນສິນຄ້າ ຢູ່ຕາມດ່ານຊາຍແດນ;

21. **ເຂດຈັດສັນຕົວເມືອງ ໝາຍເຖິງ** ເຂດທີ່ລັດຖະບານ ກຳນົດ ເພື່ອອະນຸຍາດໃຫ້ມີການລົງທຶນ ພັດທະນາອະສັງຫາລິມະຊັບ ເພື່ອສ້າງໃຫ້ເປັນເຂດທີ່ພັກພາອາໄສຂອງນັກລົງທຶນຕ່າງປະເທດ ຫລື ພົນລະເມືອງທົ່ວໄປ;

22. **ຕົວເມືອງໃໝ່ ໝາຍເຖິງ** ເຂດທີ່ໄດ້ຮັບການພັດທະນາ ໃຫ້ກາຍເປັນຕົວເມືອງທັນສະໄໝ, ມີພື້ນຖານເສດຖະກິດ ທີ່ເຂັ້ມແຂງ, ວັດທະນະທຳ-ສັງຄົມ ທີ່ສີວິໄລ ແລະ ຍຸຕິທຳ,

ເສີມສ້າງອະລິຍະທຳ ແລະ ວັດທະນະທຳຂອງຊາດ ໂດຍຕິດພັນກັບຮ່ອງຮອຍປະຫວັດສາດຂອງເຂດທີ່ຕັ້ງຕົວເມືອງ ດັ່ງກ່າວ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນ**

ລັດ ສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂອໍານວຍຄວາມສະດວກຕ່າງໆເປັນຕົ້ນ ການກໍານົດທິດທາງ, ການສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ, ການໃຫ້ນະໂຍບາຍດ້ານພາສີ-ອາກອນ, ດ້ານແຮງງານ, ການໃຫ້ສິດນໍາໃຊ້ທີ່ດິນ, ການບໍລິການການລົງທຶນປະຕູດຽວ ລວມທັງ ການຮັບຮູ້, ການຮັບປະກັນ ການປົກປ້ອງກໍາມະສິດ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນ ຈາກລັດ.

ລັດ ສົ່ງເສີມໃຫ້ລົງທຶນເຂົ້າໃສ່ທຸກຂະແໜງການ, ກິດຈະການ ແລະ ທຸກເຂດແຄວ້ນໃນທົ່ວປະເທດ ເວັ້ນເສຍແຕ່ ເຂດ ແລະ ກິດຈະການ ທີ່ແຕະຕ້ອງເຖິງ ຄວາມໝັ້ນຄົງ ແລະ ຄວາມສະຫງົບ ຂອງຊາດ, ມີຜົນສະທ້ອນ ອັນຮ້າຍແຮງ ຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານ, ຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທໍາອັນດີງາມ ຂອງຊາດ.

**ມາດຕາ 5. ຫລັກການກ່ຽວກັບການສົ່ງເສີມການລົງທຶນ**

ການສົ່ງເສີມການລົງທຶນ ຕ້ອງປະຕິບັດຕາມຫລັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນພັດທະນາຂະແໜງການ, ເຂດແຄວ້ນ ແລະ ການຂະຫຍາຍເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
2. ສົມທົບແໜ້ນ ກັບການເພີ່ມທະວີການຄຸ້ມຄອງຂອງລັດຢ່າງລວມສູນເປັນເອກະພາບໃນທົ່ວປະເທດ;
3. ຮັບປະກັນໃຫ້ການລົງທຶນໄດ້ຮັບການບໍລິການທີ່ສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ສະເໝີພາບຕໍ່ໜ້າກົດໝາຍ ດ້ວຍການບໍລິການການລົງທຶນປະຕູດຽວ;
4. ວາງນະໂຍບາຍສົ່ງເສີມດ້ານຕ່າງໆ ທີ່ສາມາດດຶງດູດ ແລະຍາດແຍ່ງການລົງທຶນ;
5. ຮັບຮູ້, ຮັບປະກັນ ການປົກປ້ອງກໍາມະສິດ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ລົງທຶນ ຈາກລັດ;
6. ຮັບປະກັນ ການປົກປັກຮັກສາ ແລະ ການພັດທະນາ ສິ່ງແວດລ້ອມ, ຄວາມສະຫງົບແລະຄວາມປອດໄພຂອງສັງຄົມ ແລະ ໃນເຂດການລົງທຶນ.

**ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ຫຼື ນິຕິບຸກຄົນ ທີ່ພົວພັນກັບການລົງທຶນທຸກປະເພດ ເພື່ອດຳເນີນການຜະລິດທຸລະກິດ ແນໃສ່ສ້າງມູນຄ່າເພີ່ມ ຍົກເວັ້ນ ທຸລະກິດຄອບຄົວ ແລະ ຜູ້ຄ້າຂາຍນ້ອຍ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະສາກົນ ກ່ຽວກັບການສົ່ງເສີມການລົງທຶນ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຢີ ແລະ ປະສົບການໃນການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ການຕະຫລາດ, ການຄ້າ, ແຫຼ່ງທຶນ, ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

## ພາກທີ II
## ຮູບການການລົງທຶນ

**ມາດຕາ 8. ຮູບການການລົງທຶນ**

ຜູ້ລົງທຶນ ສາມາດລົງທຶນທາງກົງ ຫລື ທາງອ້ອມ ດ້ວຍຮູບການ ດັ່ງນີ້:

1. ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫລື ຕ່າງປະເທດ;
2. ການລົງທຶນແບບຮຸ້ນສ່ວນ ລະຫວ່າງ ຜູ້ລົງທຶນພາຍໃນ ກັບ ຕ່າງປະເທດ;
3. ການລົງທຶນທຸລະກິດຮ່ວມຕາມສັນຍາ.

**ມາດຕາ 9. ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ**

ການລົງທຶນຝ່າຍດຽວຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ແມ່ນ ການລົງທຶນຂອງຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດຝ່າຍດຽວ ຊຶ່ງອາດຈະມີຜູ້ລົງທຶນຜູ້ດຽວ ຫຼື ຫຼາຍຄົນ ໃນກິດຈະການ ຫຼື ໂຄງການໃດໜຶ່ງ ຢູ່ ສປປ ລາວ.

**ມາດຕາ 10. ການລົງທຶນແບບຮຸ້ນສ່ວນ ລະຫວ່າງ ຜູ້ລົງທຶນພາຍໃນ ກັບຕ່າງປະເທດ**

ການລົງທຶນແບບຮຸ້ນສ່ວນ ລະຫວ່າງ ຜູ້ລົງທຶນພາຍໃນ ກັບ ຕ່າງປະເທດ ແມ່ນ ການລົງທຶນຮ່ວມ ລະຫວ່າງ ຜູ້ລົງທຶນພາຍໃນ ກັບ ຕ່າງປະເທດ ຊຶ່ງດຳເນີນທຸລະກິດ, ມີກຳມະສິດຮ່ວມກັນ ແລະ ສ້າງເປັນນິຕິບຸກຄົນໃໝ່ຂຶ້ນ ພາຍໃຕ້ກົດໝາຍຂອງ ສປປ ລາວ.

ການຈັດຕັ້ງ, ການເຄື່ອນໄຫວ, ການບໍລິຫານຄຸ້ມຄອງ, ສິດ ແລະ ພັນທະ ຂອງຜູ້ລົງທຶນແບບຮຸ້ນສ່ວນ ໄດ້ກຳນົດໄວ້ໃນສັນຍາຮ່ວມທຶນ ແລະ ກົດລະບຽບຂອງນິຕິບຸກຄົນໃໝ່ດັ່ງກ່າວ.

ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນຮູບການດັ່ງກ່າວ ຕ້ອງປະກອບທຶນຢ່າງໜ້ອຍບໍ່ໃຫ້ຫຼຸດ ສິບສ່ວນຮ້ອຍ (10%) ຂອງທຶນທັງໝົດ.

**ມາດຕາ 11. ການລົງທຶນທຸລະກິດຮ່ວມຕາມສັນຍາ**

ການລົງທຶນທຸລະກິດຮ່ວມຕາມສັນຍາ ແມ່ນ ການລົງທຶນຮ່ວມ ລະຫວ່າງ ນິຕິບຸກຄົນພາຍໃນ ສປປ ລາວ ກັບ ນິຕິບຸກຄົນຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນສັນຍາ ໂດຍບໍ່ໄດ້ສ້າງຕັ້ງເປັນນິຕິບຸກຄົນໃໝ່ ຫຼື ສາຂາຂຶ້ນ ຢູ່ ສປປ ລາວ.

ນິຕິບຸກຄົນພາຍໃນດັ່ງກ່າວ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ, ຂະແໜງການແຜນການ ແລະ ການລົງທຶນ ເພື່ອຄຸ້ມຄອງຕາມລະບຽບການ.

ສັນຍາຂອງການລົງທຶນທຸລະກິດຮ່ວມຕາມສັນຍາ ຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ.

**ມາດຕາ 12. ການກຳນົດທຶນຈົດທະບຽນ**

ທຶນຈົດທະບຽນຂອງບັນດາກິດຈະການສຳປະທານ ຕ້ອງບໍ່ໃຫ້ຫລຸດສາມສິບສ່ວນຮ້ອຍ (30%) ຂອງທຶນທັງໝົດ. ສຳລັບກິດຈະການທົ່ວໄປ ແມ່ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ວິສາຫະກິດ.

ທຶນຈົດທະບຽນ ຕ້ອງສະແດງອອກເປັນຊັບສິນ ແລະ ໃນຕະຫຼອດໄລຍະການດຳເນີນທຸລະກິດນັ້ນ ມູນຄ່າຊັບສິນ ຕ້ອງບໍ່ໃຫ້ຫລຸດທຶນຈົດທະບຽນ.

# ພາກທີ III
# ກິດຈະການ ການລົງທຶນ
## ໝວດທີ 1
## ປະເພດກິດຈະການການລົງທຶນ

**ມາດຕາ 13. ປະເພດກິດຈະການການລົງທຶນ**

ຜູ້ລົງທຶນ ສາມາດລົງທຶນໃນກິດຈະການ ດັ່ງນີ້:

- ກິດຈະການທົ່ວໄປ;
- ກິດຈະການສຳປະທານ;
- ກິດຈະການການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

**ມາດຕາ 14. ກິດຈະການທົ່ວໄປ**

ກິດຈະການທົ່ວໄປ ແມ່ນ ກິດຈະການລົງທຶນໃນຂະແໜງການທຸລະກິດທົ່ວໄປ ລວມທັງ ກິດຈະການທີ່ນອນໃນບັນຊີປະເພດທຸລະກິດຄວບຄຸມ(Negative List) ແລະ ກິດຈະການເຫລົ່ານັ້ນ ບໍ່ແມ່ນກິດຈະການສຳປະທານ.

**ມາດຕາ 15. ກິດຈະການສຳປະທານ**

ກິດຈະການສຳປະທານ ແມ່ນ ກິດຈະການລົງທຶນ ທີ່ໄດ້ຮັບອະນຸຍາດຈາກລັດໃຫ້ນຳໃຊ້ສິດໃນກຳມະສິດ ແລະ ສິດອື່ນຂອງລັດ ຕາມລະບຽບການ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເປັນຕົ້ນ ສິດສຳປະທານທີ່ດິນ, ແຮ່ທາດ, ພະລັງງານໄຟຟ້າ, ສາຍການບິນ, ໂທລະຄົມມະນາຄົມ, ປະກັນໄພ, ສະຖາບັນການເງິນ.

ບັນຊີກິດຈະການສຳປະທານ ແມ່ນ ລັດຖະບານ ເປັນຜູ້ກຳນົດ.

**ມາດຕາ 16. ກິດຈະການການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ກິດຈະການການພັດທະນາເຂດເສດຖະກິດພິເສດ ແມ່ນ ກິດຈະການລົງທຶນ ໃນເຂດເສດຖະກິດພິເສດ ເພື່ອສ້າງພື້ນຖານໂຄງລ່າງ ໃຫ້ຄົບຊຸດ ແລະ ພັດທະນາ ໃຫ້ເປັນຕົວເມືອງໃໝ່.

ກິດຈະການການພັດທະນາເຂດເສດຖະກິດສະເພາະ ແມ່ນ ກິດຈະການລົງທຶນ ໃນເຂດເສດຖະກິດສະເພາະ ເພື່ອສ້າງພື້ນຖານໂຄງລ່າງ ແລະ ພັດທະນາ ໃຫ້ເປັນເຂດ ຕ່າງໆ ຕາມເງື່ອນໄຂຕົວຈິງ ແລະ ລະບຽບກົດໝາຍ ເປັນຕົ້ນ ເຂດອຸດສາຫະກຳ, ເຂດການຜະລິດ ເພື່ອສົ່ງອອກ, ເຂດຕົວເມືອງທ່ອງທ່ຽວ ແລະ ອື່ນໆ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໄດ້ກຳນົດໄວ້ໃນລະບຽບການ ຕ່າງຫາກ.

## ໝວດທີ 2
## ການລົງທຶນໃນກິດຈະການທົ່ວໄປ

**ມາດຕາ 17 ການສະເໜີລົງທຶນ**

ຜູ້ລົງທຶນທີ່ມີຈຸດປະສົງລົງທຶນໃນກິດຈະການທົ່ວໄປ ຕ້ອງຍື່ນຄຳຮ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍວິສາຫະກິດ.

ຜູ້ລົງທຶນຕ່າງປະເທດທີ່ລົງທຶນໃນກິດຈະການທົ່ວໄປ ຕ້ອງມີທຶນທັງໝົດບໍ່ໃຫ້ຫຼຸດໜຶ່ງຕື້ກີບ.

**ມາດຕາ 18. ການພິຈາລະນາ**

ຂັ້ນຕອນ ແລະ ກຳນົດເວລາ ໃນການພິຈາລະນາການຂຶ້ນທະບຽນວິສາຫະກິດ ກ່ຽວກັບການລົງທຶນໃນກິດຈະການທົ່ວໄປ ທີ່ບໍ່ແມ່ນປະເພດທຸລະກິດຄວບຄຸມ ໃຫ້ອອກໃບທະບຽນວິສາຫະກິດຢ່າງຊ້າ ບໍ່ໃຫ້ເກີນ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ເປັນຕົ້ນໄປ, ສຳລັບປະເພດທຸລະກິດຄວບຄຸມນັ້ນ ໃຫ້ອອກໃບທະບຽນວິສາຫະກິດຢ່າງຊ້າ ບໍ່ໃຫ້ເກີນ ສິບສາມວັນລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງຂຶ້ນທະບຽນວິສາຫະກິດ ເປັນຕົ້ນໄປ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

ສຳລັບການສະເໜີ ຂະຫຍາຍກິດຈະການຂອງຜູ້ລົງທຶນ ທີ່ມີວິສາຫະກິດແລ້ວນັ້ນ ການປະກອບເອກະສານ ແມ່ນ ໃຫ້ປະກອບແຕ່ອັນຈຳເປັນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ການພິຈາລະນາ ກໍໃຫ້ວ່ອງໄວກວ່າ ການລົງທຶນໃໝ່.

**ມາດຕາ 19. ໃບທະບຽນວິສາຫະກິດ**

ໃບທະບຽນວິສາຫະກິດ ແມ່ນ ເອກະສານຮັບຮອງການຂຶ້ນທະບຽນ ເພື່ອດຳເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ.

ໃບທະບຽນວິສາຫະກິດ ລວມເອົາ ການອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ທະບຽນອາກອນ ແລະ ການອະນຸຍາດດຳເນີນກິດຈະການຂອງຂະແໜງການທີ່ກ່ຽວຂ້ອງ.

ເມື່ອໄດ້ຮັບໃບທະບຽນວິສາຫະກິດແລ້ວ ຜູ້ລົງທຶນ ສາມາດດຳເນີນທຸລະກິດໄດ້ເລີຍ.

**ມາດຕາ 20. ອາຍຸການລົງທຶນ**

ການລົງທຶນໃນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ ເວັ້ນເສຍແຕ່ກິດຈະການລົງທຶນທີ່ໄດ້ກຳນົດອາຍຸການລົງທຶນ ໄວ້ໃນລະບຽບກົດໝາຍສະເພາະ ຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ 3
## ການລົງທຶນໃນກິດຈະການສຳປະທານ

**ມາດຕາ 21. ການສະເໜີລົງທຶນ**

ຜູ້ລົງທຶນທີ່ມີຈຸດປະສົງລົງທຶນໃນກິດຈະການສຳປະທານ ຕ້ອງຍື່ນຄຳຮ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງຂະແໜງການແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລ້ວນຳສະເໜີລັດຖະບານ ຫຼື ອົງການປົກຄອງ ຂັ້ນແຂວງ ພິຈາລະນາ.

**ມາດຕາ 22. ການຄັດເລືອກເອົາຜູ້ລົງທຶນ**

ຜູ້ສະເໜີລົງທຶນໃນກິດຈະການສຳປະທານ ຕ້ອງໄດ້ຜ່ານການຄັດເລືອກ ຕາມແຕ່ກໍລະນີ ດ້ວຍວິທີການຕ່າງໆ ເປັນຕົ້ນ ການປຽບທຽບ, ການປະມູນ ຫຼື ການປະເມີນຜົນ ໂດຍຂະແໜງການແຜນການ ແລະ ການລົງທຶນ ບົນພື້ນຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ.

ໃນການຄັດເລືອກເອົາຜູ້ລົງທຶນນັ້ນ ຕ້ອງຮັບປະກັນຄວາມໂປ່ງໃສ, ການເປີດເຜີຍ ແລະ ສາມາດກວດສອບໄດ້.

ວິທີການຄັດເລືອກເອົາຜູ້ລົງທຶນໃນກິດຈະການສຳປະທານ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 23. ການພິຈາລະນາການລົງທຶນໃນກິດຈະການສຳປະທານ**

ຂະແໜງການແຜນການ ແລະ ການລົງທຶນ ພິຈາລະນາການລົງທຶນໃນກິດຈະການສຳປະທານ ຕາມຂັ້ນຕອນ ດັ່ງນີ້:

- ຄົ້ນຄວ້າ ແລະ ຕົກລົງທາງດ້ານຫລັກການກ່ຽວກັບການລົງທຶນ ໂດຍຮັບປະກັນຜົນປະໂຫຍດຂອງລັດ, ຜູ້ລົງທຶນ ແລະ ປະຊາຊົນ. ໃນກໍລະນີທີ່ມີການໂອນສິດນຳໃຊ້ທີ່ດິນຄືນໃຫ້ລັດນັ້ນ ອົງການຄຸ້ມຄອງທີ່ດິນ ທີ່ກ່ຽວຂ້ອງຕ້ອງຄິດໄລ່ຄ່າທົດແທນ ໃຫ້ຜູ້ລົງທຶນ ຫລື ປະຊາຊົນ ທີ່ໄດ້ຮັບຄວາມເສຍຫາຍ ຈາກການໂອນດັ່ງກ່າວ ຕາມລາຄາທ້ອງຕະຫລາດ;
- ແນະນຳໃຫ້ຜູ້ລົງທຶນກະກຽມບັນດາເອກະສານ ຕາມແບບພິມທີ່ໄດ້ກຳນົດໄວ້ ເປັນຕົ້ນ ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເອກະສານບັນຊີພາຫະນະ, ອຸປະກອນ ແລະ ວັດຖຸດິບຮັບໃຊ້ ການຜະລິດໂດຍກົງ ທີ່ຈະສະເໜີຂໍຍົກເວັ້ນພາສີ-ອາກອນການນຳເຂົ້າ ເພື່ອເປັນພື້ນຖານໃຫ້ແກ່ການຄົ້ນຄວ້າພິຈາລະນາອະນຸມັດ;
- ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເປັນເຈົ້າການ ໃນການເຈລະຈາ ແລະ ການຮ່າງສັນຍາເບື້ອງຕົ້ນ;
- ນຳເອົາຜົນຂອງການເຈລະຈາ ຂອງໂຄງການດັ່ງກ່າວ ເຂົ້າພິຈາລະນາໃນກອງປະຊຸມ ທີ່ຫ້ອງການບໍລິການການລົງທຶນປະຕູດຽວ ເປັນຜູ້ຈັດຂຶ້ນ;
- ນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕົກລົງ ພ້ອມທັງແນະນຳໃຫ້ຜູ້ລົງທຶນວາງເງິນຄ້ຳປະກັນໂຄງການ ຕາມລະບຽບການ ໂດຍອີງຕາມປະເພດ ແລະ ຂະໜາດ ຂອງການລົງທຶນ. ເງິນຄ້ຳປະກັນດັ່ງກ່າວ ຕ້ອງຖອກໄວ້ໃນບັນຊີຄັງເງິນແຫ່ງຊາດ ແລະ ຈະຖືກສົ່ງຄືນໃນເວລາທີ່ໂຄງການ ໄດ້ເລີ່ມຕົ້ນດຳເນີນ ໃນໄລຍະທີໜຶ່ງ.

ເມື່ອໄດ້ຮັບການຕົກລົງແລ້ວ ຂະແໜງການແຜນການ ແລະ ການລົງທຶນ ອອກໃບທະບຽນສຳປະທານໃຫ້ແກ່ຜູ້ລົງທຶນ ຕາມລະບຽບການ.

**ມາດຕາ 24. ການອອກໃບທະບຽນສຳປະທານ**

ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ອອກໃບທະບຽນສຳປະທານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພາຍຫຼັງທີ່ໄດ້ຮັບການຕົກລົງເຫັນດີ ຂອງລັດຖະບານ.

ພະແນກ, ຫ້ອງການແຜນການ ແລະ ການລົງທຶນ ເປັນຜູ້ອອກໃບທະບຽນສຳປະທານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ພາຍຫຼັງທີ່ໄດ້ຮັບການຕົກລົງເຫັນດີຂອງອົງການປົກຄອງ ທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ມາດຕາ 25. ໃບທະບຽນສຳປະທານ**

ໃບທະບຽນສຳປະທານ ແມ່ນ ເອກະສານຮັບຮອງ ການໄດ້ຮັບສິດສຳປະທານຂອງຜູ້ລົງທຶນຢ່າງຖືກຕ້ອງ ຕາມກົດໝາຍ.

ໃບທະບຽນສຳປະທານ ລວມເອົາ ທະບຽນວິສາຫະກິດ, ການອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ທະບຽນອາກອນ ແລະ ການອະນຸຍາດດຳເນີນກິດຈະການຂອງຂະແໜງການທີ່ກ່ຽວຂ້ອງ.

ເມື່ອໄດ້ຮັບໃບທະບຽນສຳປະທານແລ້ວ ຜູ້ລົງທຶນ ສາມາດດຳເນີນທຸລະກິດໄດ້ເລີຍ ແລະ ຜູ້ລົງທຶນ ຕ້ອງເຄື່ອນໄຫວກິດຈະການຂອງຕົນ ພາຍໃນກຳນົດເວລາ ເກົ້າສິບວັນ, ຖ້າຜູ້ລົງທຶນຫາກບໍ່ດຳເນີນກິດຈະການໃນກຳນົດເວລາດັ່ງກ່າວ ຂະແໜງການແຜນການ ແລະ ການລົງທຶນ ຈະມີການແຈ້ງເຕືອນເປັນລາຍລັກອັກສອນ, ຫຼັງຈາກນັ້ນ ພາຍໃນກຳນົດເວລາ ຫົກສິບວັນ ຖ້າຜູ້ລົງທຶນຫາກຍັງບໍ່ເລີ່ມດຳເນີນກິດຈະການນັ້ນ ກິດຈະການດັ່ງກ່າວ ຈະຖືກຖອນໃບທະບຽນສຳປະທານ ພ້ອມທັງຮິບເງິນຄ້ຳປະກັນເປັນຂອງລັດ.

**ມາດຕາ 26. ການສ້າງສັນຍາສຳປະທານ**

ສັນຍາສຳປະທານ ສ້າງຂຶ້ນບົນພື້ນຖານ ຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມ ລະຫວ່າງຜູ້ລົງທຶນ ກັບ ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ.

ສັນຍາສຳປະທານ ຕ້ອງກຳນົດ ເປົ້າໝາຍ, ມູນຄ່າ, ກຳນົດເວລາ, ເງື່ອນໄຂ, ສິດ ແລະ ພັນທະຂອງຄູ່ສັນຍາ.

ສັນຍາກ່ຽວກັບການລົງທຶນ ໂດຍສະເພາະ ການໂອນສິດສຳປະທານ ແລະ ການໂອນຮຸ້ນຕ້ອງນຳໄປຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານ.

**ມາດຕາ 27. ການດັດແກ້ເນື້ອໃນຂອງສັນຍາສຳປະທານ**

ເນື້ອໃນຂອງສັນຍາສຳປະທານ ອາດຈະຖືກພິຈາລະນາ ດັດແກ້, ປ່ຽນແປງ ຫລື ເພີ່ມເຕີມ ບົນພື້ນຖານການຕົກລົງເຫັນດີຂອງຄູ່ສັນຍາ. ຖ້າວ່າການດັດແກ້, ປ່ຽນແປງ ຫລື ເພີ່ມເຕີມນັ້ນ ຫາກບໍ່ແມ່ນບັນຫາທີ່ສຳຄັນ ແມ່ນ ຂະແໜງການແຜນການ ແລະການລົງທຶນ ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ ຕາມການສະເໜີຂອງຄູ່ສັນຍາ ຝ່າຍໃດຝ່າຍໜຶ່ງ ແລະ ລາຍງານໃຫ້ລັດຖະບານ ຫລື ອົງການປົກຄອງຂັ້ນແຂວງ ທີ່ກ່ຽວຂ້ອງຊາບ.

ການດັດແກ້, ປ່ຽນແປງ ຫຼື ເພີ່ມເຕີມ ສັນຍາສຳປະທານ ດ້ວຍການໂອນສິດ ແລະ ການໂອນຮຸ້ນ ຕ້ອງເສຍອາກອນ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

**ມາດຕາ 28. ອາຍຸການລົງທຶນໃນກິດຈະການສຳປະທານ**

ອາຍຸການລົງທຶນໃນກິດຈະການສຳປະທານ ແມ່ນ ອີງຕາມ ປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ ຂອງກິດຈະການສຳປະທານ ຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ ແຕ່ສູງສຸດບໍ່ໃຫ້ເກີນ ເກົ້າສິບເກົ້າປີ ແລະ ສາມາດຕໍ່ໄດ້ ຕາມການຕົກລົງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ເປັນຕົ້ນ ໃນກໍລະນີທີ່ຜູ້ລົງທຶນ ໄດ້ປະຕິບັດໂຄງການທີ່ນຳເອົາຜົນປະໂຫຍດສູງສຸດໃຫ້ແກ່ ປະເທດຊາດ, ໄດ້ປະຕິບັດສັນຍາ ຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນ ພັດທະນາທ້ອງຖິ່ນ.

## ໝວດທີ 4
## ການລົງທຶນໃນໂຄງການ ຫຼື ກິດຈະການໃນບັນຊີຮຽກການລົງທຶນ

**ມາດຕາ 29. ໂຄງການ ຫຼື ກິດຈະການໃນບັນຊີຮຽກການລົງທຶນ**

ໂຄງການ ຫຼື ກິດຈະການໃນບັນຊີຮຽກການລົງທຶນ ແມ່ນ ກິດຈະການທົ່ວໄປ ແລະ ກິດຈະການສຳປະທານ ທີ່ບັນດາຂະແໜງການ ແລະ ທ້ອງຖິ່ນເປັນຜູ້ດຳເນີນການຄົ້ນຄວ້າ ແລະ ສ້າງຂຶ້ນບົນພື້ນຖານໂຄງການ ຫຼື ກິດຈະການ ທີ່ມີຄວາມສຳຄັນຕໍ່ເສດຖະກິດແຫ່ງຊາດ ແລະ ມີທ່າແຮງບົ່ມຊ້ອນ ທາງດ້ານຊັບພະຍາກອນທຳມະຊາດ ຊຶ່ງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ໄດ້ຮັບຮອງເອົາແລ້ວ ແຕ່ມີຄວາມຈຳເປັນຕ້ອງຊອກທຶນ ເພື່ອນຳມາພັດທະນາກິດຈະການດັ່ງກ່າວ.

**ມາດຕາ 30. ເນື້ອໃນຕົ້ນຕໍຂອງໂຄງການ ຫຼື ກິດຈະການຮຽກການລົງທຶນ**

ເນື້ອໃນຕົ້ນຕໍຂອງໂຄງການ ຫຼື ກິດຈະການຮຽກການລົງທຶນ ປະກອບດ້ວຍ:

- ແຜນແມ່ບົດ ໃນການພັດທະນາ;
- ບົດວິພາກເສດຖະກິດ-ເຕັກນິກ;

- ບົດປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ;
- ເງື່ອນໄຂຂອງການລົງທຶນ;
- ແຫຼ່ງທຶນທີ່ຕ້ອງການ.

**ມາດຕາ 31. ການພິຈາລະນາໂຄງການ ຫຼື ກິດຈະການຮຽກການລົງທຶນ**

ຂະແໜງການຕ່າງໆ ເປັນເຈົ້າການ ໃນການສ້າງໂຄງການ ຫຼື ກິດຈະການຮຽກການລົງທຶນ ຕາມຍຸດທະສາດ ແລະ ແຜນການ ຂອງຕົນ. ຫຼັງຈາກນັ້ນ ແລ້ວກໍສົ່ງໃຫ້ຂະແໜງການແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ, ສັງລວມ ແລ້ວນຳສະເໜີລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນ ພິຈາລະນາຮັບຮອງ.

ພາຍຫຼັງລັດຖະບານ ຫຼື ອົງການປົກຄອງ ແຂວງ, ນະຄອນ ໄດ້ຮັບຮອງເອົາບັນດາ ໂຄງການ ຫຼື ກິດຈະການນັ້ນແລ້ວ ກໍສົ່ງໃຫ້ຂະແໜງການ, ທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ຫ້ອງການບໍລິການການລົງທຶນປະຕູດຽວ ຂອງຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອຸດສາຫະກຳ ແລະ ການຄ້າ ລວມທັງ ບັນດາສະຖານທູດ, ກົງສູນ ແລະ ຜູ້ຕາງໜ້າທາງດ້ານການຄ້າ ເພື່ອເປັນຂໍ້ມູນ ແນໃສ່ຮຽກການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ.

ສຳລັບກິດຈະການສຳປະທານ ໃນບັນຊີຮຽກການລົງທຶນນັ້ນ ການພິຈາລະນາອະນຸມັດ ຢ່າງຊ້າ ແມ່ນ ບໍ່ໃຫ້ກາຍ ສີ່ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຄຳສະເໜີ ເປັນຕົ້ນໄປ.

**ມາດຕາ 32. ການອະນຸມັດການລົງທຶນໃນໂຄງການ ຫລື ກິດຈະການຮຽກການລົງທຶນ**

ການລົງທຶນໃນໂຄງການ ຫຼື ກິດຈະການຮຽກການລົງທຶນ ແມ່ນ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງການແຜນການ ແລະ ການລົງທຶນ ເປັນຜູ້ອະນຸມັດໂດຍກົງ ພາຍຫຼັງ ທີ່ໄດ້ຄົ້ນຄວ້າ ເງື່ອນໄຂ ແລະ ຄວາມສາມາດ ຂອງຜູ້ລົງທຶນ ຕາມລະບຽບການ.

## ໝວດທີ 5
## ການລົງທຶນໃນກິດຈະການການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ

**ມາດຕາ 33. ເຂດເສດຖະກິດພິເສດ**

ເຂດເສດຖະກິດພິເສດ ແມ່ນ ເຂດພັດທະນາເປັນຕົວເມືອງໃໝ່ທີ່ໄດ້ຮັບນະໂຍບາຍສົ່ງເສີມພິເສດ ແລະ ຄຸ້ມຄອງ ດ້ວຍລະບຽບກົດໝາຍ ຂອງລັດ ແລະ ລະບຽບການສະເພາະຂອງເຂດທີ່ບໍ່ຂັດກັບຜົນປະໂຫຍດຂອງລັດ ແລະ ສັງຄົມ.

ວິສາຫະກິດ ທີ່ດຳເນີນການເຄື່ອນໄຫວ ໃນເຂດ ດັ່ງກ່າວ ຈະໄດ້ຮັບນະໂຍບາຍພິເສດ ແລະ ຄຸ້ມຄອງ ດ້ວຍກົດໝາຍ ແລະ ລະບຽບການສະເພາະ ຢ່າງສອດຄ່ອງກັບກົດໝາຍ ຂອງ ສປປ ລາວ.

ລັດຖະບານ ເປັນຜູ້ວາງແຜນ ສ້າງເຂດເສດຖະກິດພິເສດ ແລະ ອະນຸມັດໃຫ້ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ການພັດທະນາ ພື້ນຖານໂຄງລ່າງສາທາລະນຸປະໂພກ ເພື່ອຮອງຮັບການດຳເນີນທຸລະກິດ ດ້ານຂະແໜງການ ອຸດສາຫະກຳ, ການຄ້າ ແລະ ການບໍລິການ, ວັດທະນະທຳ-ສັງຄົມ.

ເຂດເສດຖະກິດພິເສດ ອາດຈະປະກອບດ້ວຍຫລາຍເຂດຂອງເຂດເສດຖະກິດສະເພາະ ເປັນຕົ້ນ ເຂດອຸດສາຫະກຳ, ເຂດການຜະລິດ ເພື່ອສົ່ງອອກ, ເຂດຕົວເມືອງທ່ອງທ່ຽວ, ເຂດການຄ້າປອດພາສີ, ເຂດພັດທະນາເຕັກໂນໂລຢີ ແລະ ຂໍ້ມູນຂ່າວສານ, ເຂດເສດຖະກິດຊາຍແດນ, ເຂດຈັດສັນຕົວເມືອງ ແລະ ອື່ນໆ.

ໂຄງປະກອບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງແຕ່ລະເຂດຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 34. ຫຼັກການການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕ້ອງສ້າງຕັ້ງຕາມຫຼັກການຕົ້ນຕໍ ດັ່ງນີ້:

1. ກຳນົດແຈ້ງ ວັດຖຸປະສົງ ຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
2. ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
3. ເປັນເຂດທີ່ເໝາະສົມກັບວັດຖຸປະສົງຂອງແຕ່ລະເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
4. ກຳນົດ ເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
5. ມີນະໂຍບາຍສົ່ງເສີມ ທາງດ້ານເສດຖະກິດເປັນອັນສະເພາະຂອງແຕ່ລະເຂດ;
6. ມີລະບົບການບໍລິຫານດ້ານເສດຖະກິດ ເຂດທີ່ເປັນເອກະລາດ ຕາມແຕ່ລະເຂດ;
7. ຢູ່ໃຕ້ການຄຸ້ມຄອງຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ຕາມການຕົກລົງຂອງລັດຖະບານ;
8. ໃຫ້ຄະນະບໍລິຫານເຂດ ມີສິດໃຫ້ຜູ້ອື່ນເຊົ່າທີ່ດິນ ແລະ ກຳນົດຄ່າເຊົ່າດ້ວຍຕົນເອງ ໂດຍບໍ່ເກີນກຳນົດເວລາຂອງສັນຍາສຳປະທານ;
9. ໃຫ້ຄະນະບໍລິຫານເຂດ ສາມາດດຳເນີນການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ພາຍໃນເຂດຂອງຕົນ;
10. ໃຫ້ຄະນະບໍລິຫານເຂດ ສາມາດດຶງດູດ ແລະ ອະນຸມັດການລົງທຶນຂອງບຸກຄົນ ຫຼື ນິຕິບຸກຄົນອື່ນ ທັງພາຍໃນ ແລະ ຕ່າງປະເທດ ພາຍໃນເຂດຂອງຕົນ;

11. ຮັບປະກັນ ຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ການປົກປັກຮັກສາ ສິ່ງແວດລ້ອມ ພາຍໃນເຂດ.

## ມາດຕາ 35. ຂັ້ນຕອນການສ້າງຕັ້ງ

ລັດຖະບານ ເປັນຜູ້ຕົກລົງ ກ່ຽວກັບການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໃດໜຶ່ງ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ ບົນພື້ນຖານການຄົ້ນຄວ້າ, ປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງ ລັດຖະບານ, ທ້ອງຖິ່ນ ແລະ ທ່າແຮງໃນດ້ານຕ່າງໆ ຂອງເຂດນັ້ນ.

ຜູ້ທີ່ມີຈຸດປະສົງສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕ້ອງຍື່ນຄໍາຮ້ອງຕໍ່ຂະແໜງການແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າ ແລະ ນໍາສະເໜີລັດຖະບານ ພິຈາລະນາ.

ການພິຈາລະນາການລົງທຶນສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ປະຕິບັດຄ້າຍຄືກັນກັບການ ພິຈາລະນາການລົງທຶນໃນກິດຈະການສໍາປະທານ. ນອກຈາກນັ້ນ ຍັງຕ້ອງແຕ່ງຕັ້ງຄະນະຮັບຜິດຊອບ ສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

ສໍາລັບການເຄື່ອນໄຫວ, ການຄຸ້ມຄອງ ແລະ ນະໂຍບາຍສົ່ງເສີມ ແຕ່ລະເຂດ ຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະນັ້ນ ແມ່ນ ລັດຖະບານເປັນຜູ້ກໍານົດ.

## ມາດຕາ 36. ຄະນະຮັບຜິດຊອບສ້າງຕັ້ງ

ຄະນະຮັບຜິດຊອບສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຖືກແຕ່ງຕັ້ງໂດຍລັດຖະບານ ຕາມການສະເໜີຂອງຂະແໜງການແຜນການ ແລະ ການລົງທຶນ ໂດຍປະສານສົມທົບກັບທ້ອງຖິ່ນທີ່ກ່ຽວຂ້ອງ.

ຄະນະຮັບຜິດຊອບສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ປະກອບດ້ວຍ ຜູ້ພັດທະນາ, ບັນດາ ຜູ້ຕາງໜ້າຈາກຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ແນວລາວສ້າງຊາດ ບ່ອນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຕັ້ງຢູ່.

ຄະນະຮັບຜິດຊອບສ້າງຕັ້ງດັ່ງກ່າວ ແຕ່ງຕັ້ງໜ່ວຍງານຊ່ວຍວຽກຂອງຕົນ ເພື່ອເປັນຜູ້ປະຈໍາການເຮັດວຽກຮ່ວມກັບຜູ້ພັດທະນາ ເພື່ອແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນໃນໄລຍະເວລາສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

## ມາດຕາ 37. ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບສ້າງຕັ້ງ

ຄະນະຮັບຜິດຊອບສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້ :

- ຄົ້ນຄວ້າ, ສະເໜີບັນຫາ ແລະ ພົວພັນກັບພາກສ່ວນຕ່າງໆ ກ່ຽວກັບການສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
- ດຳເນີນການສ້າງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ສຳເລັດຕາມຈຸດປະສົງ, ລະດັບຄາດໝາຍ ແລະ ກຳນົດເວລາ;
- ແກ້ໄຂບັນຫາຕ່າງໆທີ່ພົວພັນ ກັບການສ້າງຕັ້ງເຂດ ເປັນຕົ້ນ ກ່ຽວກັບຜູ້ພັດທະນາ ແລະ ຜົນປະໂຫຍດຂອງປະຊາຊົນ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ຄະນະຮັບຜິດຊອບສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເຄື່ອນໄຫວບົນພື້ນຖານງົບປະມານຂອງ ຜູ້ພັດທະນາ.

ຄະນະຮັບຜິດຊອບສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຈະສິ້ນສຸດລົງ ພາຍຫລັງ ທີ່ລັດຖະບານ ອອກດຳລັດວ່າດ້ວຍ ການເຄື່ອນໄຫວ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ນັ້ນ.

## ມາດຕາ 38. ເນື້ອໃນຂອງດຳລັດ

ເນື້ອໃນຕົ້ນຕໍຂອງດຳລັດວ່າດ້ວຍການເຄື່ອນໄຫວ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ປະກອບດ້ວຍ:

- ຄະນະບໍລິຫານເຂດ;
- ການເຄື່ອນໄຫວຂອງເຂດ;
- ຫຼັກການຄຸ້ມຄອງພາຍໃນເຂດ;
- ການຄຸ້ມຄອງມະຫາພາກຂອງເຂດ;
- ຫຼັກການໃນການວາງນະໂຍບາຍສົ່ງເສີມ;
- ການແບ່ງປັນຜົນປະໂຫຍດ ລະຫວ່າງ ລັດ ແລະ ຜູ້ພັດທະນາ.

## ມາດຕາ 39. **ການກຳນົດນະໂຍບາຍສົ່ງເສີມການລົງທຶນພາຍໃນເຂດເສດຖະກິດພິເສດ** ແລະ ເຂດເສດຖະກິດສະເພາະ

ຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເປັນຜູ້ຄົ້ນຄວ້າ, ກຳນົດນະໂຍບາຍສົ່ງເສີມການ ລົງທຶນ ແລະ ນະໂຍບາຍດ້ານເສດຖະກິດອື່ນ ພາຍໃນເຂດຂອງຕົນ

ຕາມຂອບເຂດ ທີ່ລັດຖະບານກຳນົດອອກໃນດຳລັດວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງ ຂອງແຕ່ລະເຂດ.

**ມາດຕາ 40. ຫຼັກການການເຄື່ອນໄຫວ ຂອງເຂດເສດຖະກິດພິເສດ** ແລະ ເຂດເສດຖະກິດສະເພາະ

ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເຄື່ອນໄຫວຕາມຫຼັກການ ດັ່ງນີ້ :

1. ເປັນເອກະລາດທາງດ້ານບໍລິຫານເສດຖະກິດ;
2. ຢູ່ພາຍໃຕ້ການຄຸ້ມຄອງດ້ານມະຫາພາກ ຂອງລັດຖະບານ ຫຼື ອີງການປົກຄອງທ້ອງຖິ່ນ ຊຶ່ງລັດຖະບານ ເປັນຜູ້ມອບໝາຍໃຫ້.

**ມາດຕາ 41. ການພັດທະນາ**

ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນ ເລັງໃສ່ການກໍ່ສ້າງພື້ນຖານໂຄງລ່າງ ຢ່າງຄົບຊຸດ ເພື່ອສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ແກ່ການດຶງດູດການລົງທຶນ ໂດຍໃຫ້ສອດຄ່ອງ ກັບວັດຖຸປະສົງແຕ່ລະເຂດ ຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ລັດອະນຸມັດ.

**ມາດຕາ 42. ອາຍຸການລົງທຶນ ໃນກິດຈະການ ການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ອາຍຸການລົງທຶນ ໃນກິດຈະການການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນ ອີງຕາມ ປະເພດ, ຂະໜາດ, ເງື່ອນໄຂ ແຕ່ລະເຂດຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຊຶ່ງສູງສຸດບໍ່ເກີນ ເກົ້າສິບເກົ້າປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ລະກໍລະນີ ຕາມການຕົກລົງຂອງລັດຖະບານ ເປັນຕົ້ນ ໃນກໍລະນີ ທີ່ຜູ້ລົງທຶນ ໄດ້ປະຕິບັດໂຄງການທີ່ນຳເອົາຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ໄດ້ປະຕິບັດສັນຍາ ຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນ ພັດທະນາທ້ອງຖິ່ນ.

**ມາດຕາ 43. ການສະເໜີລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຂອງຜູ້ລົງທຶນອື່ນ**

ນອກຈາກ ຜູ້ພັດທະນາແລ້ວ ຜູ້ລົງທຶນອື່ນ ທີ່ມີຈຸດປະສົງລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ນັ້ນ ຕ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ກ່ຽວຂ້ອງ ເພື່ອພິຈາລະນາຕາມລະບຽບການ.

ການລົງທຶນ ຂອງຜູ້ລົງທຶນອື່ນ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນ ບໍ່ຈຳກັດອາຍຸການລົງທຶນ ເວັ້ນເສຍແຕ່ ກິດຈະການລົງທຶນ ທີ່ໄດ້ກຳນົດອາຍຸການລົງທຶນໄວ້ ໃນລະບຽບກົດໝາຍ ຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ 6
## ການບໍລິການການລົງທຶນປະຕູດຽວ

### ມາດຕາ 44. ການບໍລິການການລົງທຶນປະຕູດຽວ

ການບໍລິການການລົງທຶນປະຕູດຽວ ແມ່ນ ການບໍລິການທີ່ເອື້ອອຳນວຍຄວາມສະດວກຮອບດ້ານ ໃຫ້ແກ່ຜູ້ລົງທຶນດ້ວຍ ການໃຫ້ບໍລິການຂໍ້ມູນຂ່າວສານ, ການພິຈາລະນາການລົງທຶນ, ການອອກໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານ ແລະ ການອອກໃບແຈ້ງການຕ່າງໆ ກ່ຽວກັບການລົງທຶນ.

ຫ້ອງການບໍລິການການລົງທຶນປະຕູດຽວ ຖືກສ້າງຕັ້ງຂຶ້ນ ຢູ່ :

- ຂະແໜງການແຜນການ ແລະການລົງທຶນ ສຳລັບການລົງທຶນ ໃນກິດຈະການສຳປະທານ ແລະ ກິດຈະການການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
- ຂະແໜງການອຸດສາຫະກຳ ແລະ ການຄ້າ ສຳລັບການລົງທຶນໃນກິດຈະການທົ່ວໄປ;
- ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ສຳລັບການລົງທຶນເຂົ້າໃນເຂດດັ່ງກ່າວ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການການລົງທຶນປະຕູດຽວ ໄດ້ກຳນົດໄວ້ໃນລະບຽບການ.

### ມາດຕາ 45. ຫລັກການ ການບໍລິການການລົງທຶນປະຕູດຽວ

ຫລັກການ ການບໍລິການການລົງທຶນປະຕູດຽວ ມີ ດັ່ງນີ້:

1. ຜູ້ລົງທຶນສະເໜີລົງທຶນຢູ່ບ່ອນໃດ ແມ່ນ ໄດ້ຮັບຄຳຕອບຢູ່ບ່ອນນັ້ນ, ການໃຫ້ຄຳຕອບແກ່ຜູ້ລົງທຶນ ຕ້ອງປະຕິບັດຕາມກຳນົດເວລາທີ່ໄດ້ບົ່ງໄວ້ ໃນລະບຽບການທີ່ປະກາດແຈ້ງຢູ່ຫ້ອງການບໍລິການການລົງທຶນປະຕູດຽວ;
2. ການສະເໜີລົງທຶນ ສາມາດດຳເນີນດ້ວຍຜູ້ລົງທຶນເອງ ຫຼື ຜ່ານຕົວແທນທີ່ຖືກຕ້ອງ ຕາມກົດໝາຍ;
3. ການບໍລິການ ຕ້ອງຮັບປະກັນການສະໜອງຂໍ້ມູນຂ່າວສານ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນກັບຜູ້ລົງທຶນ;

4. ຄ່າທຳນຽມ ແລະ ຄ່າບໍລິການ ຕ້ອງປະກາດຢ່າງເປີດເຜີຍ ແລະ ຕິດຢູ່ບ່ອນສະຖານທີ່ບໍລິການການລົງທຶນປະຕູດຽວ;
5. ການບໍລິການ ຕ້ອງເປັນໄປຕາມລະບຽບການ, ມີແບບແຜນ ວິທີເຮັດວຽກກະທັດຮັດ, ວ່ອງໄວ, ປະດິດສ້າງ, ໂປ່ງໃສ, ເປີດເຜີຍ ແລະສາມາດກວດສອບໄດ້;
6. ການຕົກລົງບັນຫາຕ່າງໆ ກ່ຽວກັບການລົງທຶນ ຕ້ອງຜ່ານກອງປະຊຸມ ຂອງຫ້ອງການບໍລິການການລົງທຶນປະຕູດຽວ.

### ມາດຕາ 46. ກົນໄກການຈັດຕັ້ງປະຕິບັດ ການບໍລິການການລົງທຶນປະຕູດຽວ

ຫ້ອງການບໍລິການການລົງທຶນປະຕູດຽວ ຕ້ອງຈັດກອງປະຊຸມປະຈຳອາທິດ ຊຶ່ງປະກອບດ້ວຍ ບັນດາຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງຈາກຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າບັນຫາຕ່າງໆ ກ່ຽວກັບການລົງທຶນ ໂດຍສົ່ງເອກະສານກ່ອນລ່ວງໜ້າ ໃຫ້ບັນດາຜູ້ຕາງໜ້າດັ່ງກ່າວ ເພື່ອໃຫ້ຂັ້ນນຳຂອງຕົນມີຄຳເຫັນກ່ອນມາເຂົ້າຮ່ວມກອງປະຊຸມ.

ຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ແຕ່ງຕັ້ງ ຜູ້ປະສານງານດ້ານການລົງທຶນ ຊຶ່ງມີໜ້າທີ່ປະສານສົມທົບ ກັບທຸກພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການລົງທຶນ ເປັນຕົ້ນ ແມ່ນ ການສົ່ງຂໍ້ມູນ-ຂ່າວສານ ທີ່ຈຳເປັນກ່ຽວກັບຂະແໜງການ ແລະ ທ້ອງຖິ່ນ ຂອງຕົນ ໃຫ້ຫ້ອງການບໍລິການການລົງທຶນປະຕູດຽວ ເພື່ອສະໜອງຂໍ້ມູນຂ່າວສານ ໃຫ້ແກ່ຜູ້ລົງທຶນ.

## ໝວດທີ 7
## ຫ້ອງການຜູ້ຕາງໜ້າ ແລະ ສາຂາ

### ມາດຕາ 47. ຫ້ອງການຜູ້ຕາງໜ້າ

ນິຕິບຸກຄົນຕ່າງປະເທດທີ່ມີຈຸດປະສົງສ້າງຕັ້ງຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງກະຊວງແຜນການ ແລະ ການລົງທຶນ ເພື່ອພິຈາລະ ນາ ແລະ ອອກໃບທະບຽນສ້າງຕັ້ງຫ້ອງການຜູ້ຕາງໜ້ານັ້ນ ພາຍໃນກຳນົດເວລາ ຫ້າ ວັນ ນັບແຕ່ວັນໄດ້ຮັບຄຳສະເໜີ ຂອງຜູ້ລົງທຶນເປັນຕົ້ນໄປ.

ໃບທະບຽນດັ່ງກ່າວ ຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍ ຂອງຫ້ອງການຜູ້ຕາງໜ້າ ຊຶ່ງສາມາດເຄື່ອນໄຫວຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ເປັນຕົ້ນ ການເກັບກຳຂໍ້ມູນທາງດ້ານການລົງທຶນໃຫ້ແກ່ບໍລິສັດແມ່ ເພື່ອເປັນພື້ນຖານໃນການພິຈາລະນາການລົງທຶນ ຢູ່ ສປປ ລາວ ແຕ່ຫາກບໍ່ມີສິດເຄື່ອນໄຫວທຸລະກິດ.

**ມາດຕາ 48. ສາຂາຂອງນິຕິບຸກຄົນ**

ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນ ຢູ່ ສປປ ລາວ ຕ້ອງສະເໜີຜ່ານການບໍລິການການລົງທຶນປະຕູດຽວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ ແລະ ອອກໃບທະບຽນສ້າງຕັ້ງສາຂາ ພາຍໃນ ສິບຫ້າ ວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

ໃບທະບຽນດັ່ງກ່າວ ຮັບຮູ້ສິດທີ່ຖືກຕ້ອງຕາມກົດໝາຍຂອງສາຂາ ຊຶ່ງສາມາດເຄື່ອນໄຫວດຳເນີນທຸລະກິດໄດ້ ຕາມການມອບໝາຍຂອງບໍລິສັດແມ່.

ນິຕິບຸກຄົນພາຍໃນທີ່ມີຈຸດປະສົງສ້າງຕັ້ງສາຂາຂອງຕົນ ໃນກິດຈະການທົ່ວໄປ ແລະ ກິດຈະການສຳປະທານ ຢູ່ພາຍໃນປະເທດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ.

# ພາກທີ IV
# ການສົ່ງເສີມ ແລະ ປົກປ້ອງການລົງທຶນ
## ໝວດທີ 1
## ການສົ່ງເສີມການລົງທຶນດ້ານພາສີ-ອາກອນ

**ມາດຕາ 49. ຂະແໜງການທີ່ໄດ້ຮັບການສົ່ງເສີມ**

ຂະແໜງການທີ່ໄດ້ຮັບການສົ່ງເສີມ ມີ ກະສິກຳ, ອຸດສາຫະກຳ, ຫັດຖະກຳ ແລະ ການບໍລິການ ຊຶ່ງແມ່ນລັດຖະບານເປັນຜູ້ກຳນົດບັນຊີລະອຽດ ຂອງບັນດາກິດຈະການ ໃນຂະແໜງການດັ່ງກ່າວ ເປັນສາມລະດັບ ໂດຍອີງໃສ່ກິດຈະການບູລິມະສິດຂອງລັດຖະບານ, ກິດຈະການທີ່ຕິດພັນກັບການແກ້ໄຂຄວາມທຸກຍາກ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ, ການສ້າງພື້ນຖານໂຄງລ່າງ, ການພັດທະນາຊັບພະຍາກອນມະນຸດ, ການສ້າງວຽກເຮັດງານທຳ ແລະ ອື່ນໆ.

ການສົ່ງເສີມ ແບ່ງອອກເປັນສາມລະດັບ ດັ່ງນີ້ :

- ລະດັບ 1: ແມ່ນ ບັນດາກິດຈະການທີ່ໄດ້ຮັບການສົ່ງເສີມສູງສຸດ;
- ລະດັບ 2: ແມ່ນ ບັນດາກິດຈະການທີ່ໄດ້ຮັບການສົ່ງເສີມປານກາງ;
- ລະດັບ 3: ແມ່ນ ບັນດາກິດຈະການທີ່ໄດ້ຮັບການສົ່ງເສີມຕໍ່າ.

**ມາດຕາ 50. ເຂດສົ່ງເສີມການລົງທຶນ**

ເຂດສົ່ງເສີມການລົງທຶນ ໄດ້ກຳນົດຂຶ້ນ ໂດຍອີງຕາມສະພາບພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ແລະ ພູມີປະເທດ ຊຶ່ງແບ່ງອອກເປັນສາມເຂດ ດັ່ງນີ້:

ເຂດ 1: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ທີ່ຍັງບໍ່ທັນອຳນວຍຄວາມສະດວກແກ່ການລົງທຶນ ແລະ ພູມີປະເທດ ສ່ວນໃຫຍ່ເປັນເຂດ ພູດອຍ ຫ່າງໄກສອກຫລີກ. ເຂດດັ່ງກ່າວຈະໄດ້ຮັບການສົ່ງເສີມການລົງທຶນ ໃນລະດັບສູງສຸດ;

ເຂດ 2: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ທີ່ສາມາດອໍານວຍຄວາມສະດວກແກ່ການລົງທຶນໄດ້ສ່ວນໃດສ່ວນໜຶ່ງ ແລະ ພູມີປະເທດ ບໍ່ທຸລະກັນດານເທົ່າກັບເຂດ 1. ເຂດດັ່ງ ກ່າວຈະໄດ້ຮັບການສົ່ງເສີມການລົງທຶນ ໃນລະດັບກາງ;

ເຂດ 3: ເຂດທີ່ມີພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ທີ່ສາມາດອໍານວຍຄວາມສະດວກແກ່ການລົງທຶນໄດ້ດີ. ເຂດດັ່ງກ່າວ ຈະໄດ້ຮັບການສົ່ງເສີມການລົງທຶນ ໃນລະດັບຕໍ່າ.

ບັນຊີແຕ່ລະເຂດສົ່ງເສີມການລົງທຶນ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

**ມາດຕາ 51. ນະໂຍບາຍດ້ານອາກອນກໍາໄລ**

ນະໂຍບາຍດ້ານອາກອນກໍາໄລ ປະຕິບັດ ດັ່ງນີ້:

1. ເຂດ 1
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 10 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 6 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 3 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 4 ປີ;
2. ເຂດ 2
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 6 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 4 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 3 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 2 ປີ;
3. ເຂດ 3
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 1 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 4 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 2 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 2 ປີ;
   - ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ ລະດັບ 3 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ 1 ປີ.

ໄລຍະການຍົກເວັ້ນອາກອນກໍາໄລ ແມ່ນ ໃຫ້ນັບແຕ່ວັນໄດ້ດໍາເນີນທຸລະກິດເປັນຕົ້ນໄປ. ສໍາລັບ ກິດຈະການຜະລິດສິນຄ້າໃໝ່, ກິດຈະການຄົ້ນຄວ້າ ແລະ ສ້າງເຕັກໂນໂລຢີໃໝ່ນັ້ນ ການຍົກ

ເວັ້ນ ອາກອນກຳໄລ ແມ່ນ ໃຫ້ນັບແຕ່ວັນມີກຳໄລເປັນຕົ້ນໄປ. ຫຼັງຈາກສິ້ນສຸດໄລຍະຍົກເວັ້ນອາກອນກຳໄລ ດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ກິດຈະການດັ່ງກ່າວ ຕ້ອງໄດ້ເສຍພັນທະອາກອນກຳໄລ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ.

ກິດຈະການສຳປະທານໃນການຂຸດຄົ້ນບໍ່ແຮ່, ພະລັງງານໄຟຟ້າ ແລະ ກິດຈະການປູກໄມ້ໃຫ້ປະຕິບັດ ຕາມກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 52. ນະໂຍບາຍດ້ານພາສີ, ອາກອນອື່ນ**

ຜູ້ລົງທຶນ ນອກຈາກ ໄດ້ຮັບນະໂຍບາຍດ້ານອາກອນກຳໄລແລ້ວ ຍັງຈະໄດ້ຮັບນະໂຍບາຍ ດ້ານ ພາສີ, ອາກອນອື່ນ ດັ່ງນີ້:

1. ໄດ້ຮັບການຍົກເວັ້ນອາກອນກຳໄລໃນປີການບັນຊີປີຖັດໄປ ສຳລັບ ການນຳເອົາເງິນກຳໄລສຸດທິ ທີ່ໄດ້ຮັບຈາກການດຳເນີນທຸລະກິດຂອງຕົນໄປລົງທຶນ ເພື່ອຂະຫຍາຍກິດຈະການ;
2. ໄດ້ຮັບການຍົກເວັ້ນພາສີນຳເຂົ້າວັດຖຸດິບ, ອຸປະກອນ ແລະ ພາຫະນະ ຮັບໃຊ້ການຜະລິດໂດຍກົງ, ສຳລັບການຍົກເວັ້ນອາກອນນຳເຂົ້າ ສິ່ງດັ່ງກ່າວທີ່ມີລັກສະນະ ສົ່ງເສີມນັ້ນ ໃຫ້ປະຕິບັດຕາມລະບຽບການສະເພາະ;
3. ໄດ້ຮັບການຍົກເວັ້ນພາສີຂາອອກ ສຳລັບຜະລິດຕະພັນທົ່ວໄປ ເພື່ອສົ່ງອອກ. ສ່ວນການສົ່ງອອກ ຊັບພະຍາກອນທຳມະຊາດ, ຜະລິດຕະພັນຈາກຊັບພະຍາກອນທຳມະຊາດ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

   ສຳລັບການນຳເຂົ້ານ້ຳມັນເຊື້ອໄຟທຸກປະເພດ ແມ່ນ ບໍ່ໄດ້ຮັບການຍົກເວັ້ນ ດ້ານພາສີ-ອາກອນ;
4. ຜູ້ລົງທຶນ ສາມາດຍົກເງິນຂາດທຶນປະຈຳປີ ໄປຫັກອອກໃນປີຖັດໄປ ຫາກມີການຂາດທຶນປະຈຳປີ ຊຶ່ງເຈົ້າໜ້າທີ່ສ່ວຍສາອາກອນໄດ້ກວດກາຢັ້ງຢືນແລ້ວ ພາຍໃນກຳນົດເວລາສາມປີ. ເມື່ອໝົດກຳນົດແລ້ວ ເງິນຂາດທຶນທີ່ຍັງເຫຼືອຈະບໍ່ອະນຸຍາດ ໃຫ້ຫັກອອກຈາກກຳໄລຕໍ່ໄປອີກ. ສຳລັບເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນ ໃຫ້ປະຕິບັດຕາມດຳລັດວ່າດ້ວຍ ການສ້າງຕັ້ງ ແລະ ເຄື່ອນໄຫວ ຂອງແຕ່ລະເຂດ.

**ມາດຕາ 53. ນະໂຍບາຍການເຂົ້າເຖິງແຫຼ່ງທຶນ**

ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງແຫຼ່ງທຶນ ດ້ວຍການກູ້ຢືມເງິນນຳທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ຢູ່ ສປປ ລາວ ແລະ ຕ່າງປະເທດ ຕາມລະບຽບກົດໝາຍ.

**ມາດຕາ 54. ນະໂຍບາຍສົ່ງເສີມສະເພາະ**

ນະໂຍບາຍສົ່ງເສີມສະເພາະ ມີ ດັ່ງນີ້:

1. ການລົງທຶນສ້າງໂຮງໝໍ, ໂຮງຮຽນອະນຸບານ, ໂຮງຮຽນສາມັນສຶກສາ,ໂຮງຮຽນວິຊາຊີບ, ວິທະຍາໄລ, ມະຫາວິທະຍາໄລ, ສູນຄົ້ນຄວ້າ-ວິໄຈ, ບາງກິດຈະການສາທາລະນະປະໂຫຍດ ແລະ ສາທາລະນຸປະໂພກ ຈະໄດ້ຮັບນະໂຍບາຍ ຍົກເວັ້ນການເກັບຄ່າເຊົ່າ ຫລື ສຳປະທານທີ່ດິນຂອງລັດ ດັ່ງນີ້:
    - ເຂດ 1: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 15 ປີ;
    - ເຂດ 2: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 10 ປີ;
    - ເຂດ 3: ໄດ້ຮັບການຍົກເວັ້ນຄ່າເຊົ່າ ຫລື ສຳປະທານ 3 ປີ.
2. ການລົງທຶນສ້າງ ໂຮງໝໍ, ໂຮງຮຽນອະນຸບານ, ໂຮງຮຽນສາມັນສຶກສາ,ໂຮງຮຽນວິຊາຊີບ, ວິທະຍາໄລ, ມະຫາວິທະຍາໄລ, ສູນຄົ້ນຄວ້າ-ວິໄຈ ແລະກິດຈະການສາທາລະນຸປະໂພກຕ່າງໆ ຈະໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລເພີ່ມ 5 ປີ ຈາກການສົ່ງເສີມ ທີ່ໄດ້ກຳນົດໄວ້ໃນ ມາດຕາ 51 ຂອງກົດໝາຍ ສະບັບນີ້.

**ມາດຕາ 55. ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍດ້ານພາສີ ແລະ ອາກອນ**

ການຈັດຕັ້ງປະຕິບັດກ່ຽວກັບນະໂຍບາຍດ້ານພາສີ ແລະອາກອນ ມີ ດັ່ງນີ້:

1. ຂະແໜງການການເງິນ ເປັນຜູ້ຈັດຕັ້ງປະຕິບັດ ການໃຫ້ນະໂຍບາຍສົ່ງເສີມ ດ້ານພາສີ-ອາກອນ ຕາມທີ່ໄດ້ກຳນົດໄວ້ໃນ ໃບທະບຽນວິສາຫະກິດ ຫຼື ໃບທະບຽນສຳປະທານ;
2. ສຳລັບການຍົກເວັ້ນພາສີນຳເຂົ້າ ວັດຖຸດິບ, ອຸປະກອນ ແລະ ພາຫະນະຮັບໃຊ້ການຜະລິດໂດຍກົງ ໃຫ້ຂະແໜງການການເງິນ ຈັດຕັ້ງປະຕິບັດຕົວຈິງ ໂດຍສອດຄ່ອງກັບກົດໝາຍ ສະບັບນີ້.

## ໝວດທີ 2
## ການສົ່ງເສີມການລົງທຶນດ້ວຍນະໂຍບາຍດ້ານອື່ນໆ

**ມາດຕາ 56. ການສົ່ງເສີມການລົງທຶນດ້ວຍນະໂຍບາຍດ້ານອື່ນໆ**

ການສົ່ງເສີມການລົງທຶນດ້ວຍນະໂຍບາຍດ້ານອື່ນໆ ມີ ດັ່ງນີ້:

- ການສົ່ງເສີມດ້ານຂໍ້ມູນຂ່າວສານ;
- ການສົ່ງເສີມດ້ວຍສິດນຳໃຊ້ທີ່ດິນ.

**ມາດຕາ 57. ການສົ່ງເສີມດ້ານຂໍ້ມູນຂ່າວສານ**

ເພື່ອຮັບປະກັນໃຫ້ຜູ້ລົງທຶນໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບການລົງທຶນ ຢ່າງຄົບຖ້ວນ, ເອກະພາບ, ວ່ອງໄວ, ທັນການ ແລະ ສາມາດຕັດສິນໃຈລົງທຶນໄດ້ນັ້ນ ຕ້ອງສ້າງສູນຂໍ້ມູນຂ່າວສານການລົງທຶນ ຢູ່ໃນຫ້ອງການບໍລິການການລົງທຶນປະຕູດຽວ ທີ່ກ່ຽວຂ້ອງ.

ສູນຂໍ້ມູນຂ່າວສານການລົງທຶນ ເປັນຜູ້ເກັບກໍາ ແລະ ສັງລວມບັນດາຂໍ້ມູນກ່ຽວກັບການລົງທຶນ ເພື່ອສ້າງເຄືອຂ່າຍ, ສະໜອງ ແລະ ແລກປ່ຽນຂໍ້ມູນຂ່າວສານ ເປັນຕົ້ນ ການໂຄສະນາຜ່ານລະບົບເວັບໄຊ, ປື້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ອື່ນໆ ກ່ຽວກັບການລົງທຶນ ໃຫ້ຜູ້ທີ່ມີຄວາມສົນໃຈ, ສະຖານທູດ, ກົງສູນລາວ ຫຼື ຫ້ອງການຜູ້ຕາງໜ້າທາງດ້ານການຄ້າລາວ ປະຈໍາຢູ່ຕ່າງປະເທດ ເພື່ອສະໜອງໃຫ້ຜູ້ທີ່ຕ້ອງການມາລົງທຶນ.

**ມາດຕາ 58. ການສົ່ງເສີມດ້ວຍສິດນໍາໃຊ້ທີ່ດິນ**

ຜູ້ລົງທຶນຕ່າງປະເທດ ທີ່ມາລົງທຶນໃນໂຄງການທີ່ມີທຶນຈົດທະບຽນ ແຕ່ ຫ້າແສນ ໂດລາສະຫະລັດຂຶ້ນໄປ ມີສິດຊື້ສິດນໍາໃຊ້ທີ່ດິນ ຈາກລັດ ທີ່ໄດ້ມີການກໍານົດຈັດສັນ ຕາມກໍານົດເວລາຂອງການລົງທຶນ ເພື່ອປຸກສ້າງສິ່ງຕ່າງໆ ເປັນທີ່ຢູ່ອາໄສ ຫລື ສະຖານທີ່ດໍາເນີນທຸລະກິດ ດ້ວຍການຕົກລົງຂອງອົງການປົກຄອງທ້ອງຖິ່ນ ຕາມລະບຽບການ.

ລັດຖະບານ ເປັນຜູ້ກໍານົດລະບຽບການ, ກົນໄກການແບ່ງຂັ້ນຄຸ້ມຄອງ ກ່ຽວກັບການສົ່ງເສີມດ້ວຍສິດ ນໍາໃຊ້ທີ່ດິນຂອງຜູ້ລົງທຶນຕ່າງປະເທດ.

**ມາດຕາ 59. ການເປີດກວ້າງນະໂຍບາຍສົ່ງເສີມ**

ນອກຈາກນະໂຍບາຍສົ່ງເສີມທີ່ໄດ້ກໍານົດໄວ້ໃນໝວດທີ 1 ແລະ ໝວດທີ 2 ຂອງພາກທີ IV ແລ້ວ ຖ້າເຫັນວ່າມີຄວາມຈໍາເປັນຕ້ອງມີນະໂຍບາຍສົ່ງເສີມຕື່ມ ຕໍ່ບາງຂະແໜງການ, ເຂດລົງທຶນ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃດໜຶ່ງນັ້ນ ລັດຖະບານ ມີສິດນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດ ບໍ່ເປີດກອງປະຊຸມ ເພື່ອພິຈາລະນາ ແລະ ຕົກລົງ.

## ໝວດທີ 3

## ການປົກປ້ອງການລົງທຶນ

**ມາດຕາ 60. ການປົກປ້ອງການລົງທຶນ**

ຜູ້ລົງທຶນ ລ້ວນແຕ່ໄດ້ຮັບສິດສະເໝີພາບໃນການລົງທຶນ, ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງຕົນ ພາຍໃຕ້ລະບຽບກົດໝາຍຂອງ ສປປ ລາວ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 61. ຮູບການປົກປ້ອງການລົງທຶນ**

ລັດ ຮັບຮູ້ ແລະ ປົກປ້ອງການລົງທຶນຂອງຜູ້ລົງທຶນຢ່າງເຕັມສ່ວນ ໂດຍບໍ່ເກັບເກນ, ຍຶດ ແລະ ໂອນມາເປັນຂອງລັດ ດ້ວຍວິທີການທາງດ້ານບໍລິຫານ.

ໃນກໍລະນີທີ່ລັດຖະບານ ມີຄວາມຈຳເປັນນຳໃຊ້ ເພື່ອສາທາລະນະປະໂຫຍດ ຜູ້ລົງທຶນ ຈະໄດ້ຮັບຄ່າທົດແທນຄືນ ຕາມມູນຄ່າຕົວຈິງ ຕາມລາຄາຕະຫລາດ ໃນເວລາມອບໂອນ ແລະ ດ້ວຍວິທີການຊຳລະ ທີ່ຕົກລົງກັນ.

**ມາດຕາ 62. ການປົກປ້ອງຊັບສິນທາງປັນຍາ**

ລັດ ຮັບຮູ້ ແລະ ປົກປ້ອງຊັບສິນທາງປັນຍາຂອງຜູ້ລົງທຶນ ທີ່ຈົດທະບຽນຢ່າງຖືກຕ້ອງ ຕາມກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ຂອງ ສປປ ລາວ ຫລື ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ V
# ສິດ ແລະ ພັນທະ ຂອງຜູ້ລົງທຶນ

**ມາດຕາ 63. ສິດຂອງຜູ້ລົງທຶນ**

ຜູ້ລົງທຶນ ມີສິດຕົ້ນຕໍ ດັ່ງນີ້:

1. ສິດເປັນເຈົ້າ ໃນການລົງທຶນ;
2. ສິດໃນການຄຸ້ມຄອງ-ບໍລິຫານ ກິດຈະການການລົງທຶນຂອງຕົນ;
3. ສິດໃນການວ່າຈ້າງແຮງງານ;
4. ສິດໃນການຢູ່ອາໄສ ສຳລັບຜູ້ລົງທຶນຕ່າງປະເທດ;
5. ສິດຂອງຜູ້ລົງທຶນຕ່າງປະເທດ ໃນການສົ່ງທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ.

**ມາດຕາ 64. ສິດເປັນເຈົ້າ ໃນການລົງທຶນ**

ສິດເປັນເຈົ້າ ໃນການລົງທຶນ ມີ ດັ່ງນີ້:

1. ລົງທຶນໃນທຸກຂະແໜງການ ແລະ ທຸກເຂດລົງທຶນ ທີ່ບໍ່ຫວງຫ້າມ ຕາມກົດໝາຍຂອງ ສປປ ລາວ;
2. ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
3. ຂໍສຳປະທານໂຄງການຈາກລັດຖະບານ ຫລື ອົງການປົກຄອງທ້ອງຖິ່ນ ຕາມແຕ່ກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;
4. ຂໍສຳປະທານສ້າງຕັ້ງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຈາກລັດຖະບານ;
5. ສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາ ຂອງຕົນ ຢູ່ ສປປ ລາວ;
6. ຂໍປ່ຽນວັດຖຸປະສົງ ຫລື ກິດຈະການລົງທຶນ ໃນກໍລະນີທີ່ ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງມາຈາກການປ່ຽນແປງດ້ານນະໂຍບາຍ ຫລື ລະບຽບກົດໝາຍຂອງລັດ;
7. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ;
8. ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
9. ໄດ້ຮັບການອຳນວຍຄວາມສະດວກຈາກລັດໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;
10. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫລື ການສຳປະທານ ເຊັ່ນ: ສິດໃຊ້, ເປັນຫລັກຊັບຄ້ຳປະກັນນຳບຸກຄົນອື່ນ ຫລື ສະຖາບັນການເງິນ ຫລື ໃຫ້ຮ່ວມທຶນ, ໃຫ້ເຊົ່າ, ຊື້-ຂາຍສິດໃຊ້ທີ່ດິນ, ໃຫ້ສືບທອດສັນຍາເຊົ່າທີ່ດິນຕາມອາຍຸຂອງສັນຍາ ແລະ ອື່ນໆ ຕາມກົດໝາຍ;
11. ສຳລັບຜູ້ເຊົ່າ ຫລື ສຳປະທານທີ່ດິນ ມີສິດໃຊ້ທີ່ດິນ ຕາມອາຍຸເຊົ່າ ຫລື ສຳປະທານ, ເປັນເຈົ້າກຳມະສິດກ່ຽວກັບ ຕຶກ, ອາຄານ ຫລື ສິ່ງປຸກສ້າງ ໃນທີ່ດິນດັ່ງກ່າວ ເປັນຕົ້ນ ມີສິດໂອນໃຫ້ຄົນພາຍໃນ ຫຼື ຕ່າງປະເທດໄດ້;
12. ເປີດບັນຊີເປັນເງິນກີບ ຫລື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;
13. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ ເຫັນວ່າຕົນຖືກອັບປະໂຫຍດ ໃນການລົງທຶນ;
14. ໄດ້ຮັບສິດ ແລະ ຜົນປະໂຫຍດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 65. ສິດໃນການຄຸ້ມຄອງ-ບໍລິຫານ ກິດຈະການການລົງທຶນຂອງຕົນ**

ສິດໃນການຄຸ້ມຄອງ-ບໍລິຫານ ກິດຈະການການລົງທຶນຂອງຕົນ ມີ ດັ່ງນີ້:

1. ວາງແຜນການໃນການລົງທຶນຂອງຕົນ;
2. ຈັດຫາ ແລະນຳໃຊ້ວັດຖຸ, ອຸປະກອນ, ພາຫະນະ, ກົນຈັກ ແລະ ເຕັກໂນໂລຢີຕ່າງໆເຂົ້າໃນການລົງທຶນຂອງຕົນ;

3. ເຂົ້າເຖິງຕະຫຼາດພາຍໃນ ແລະຕ່າງປະເທດ;
4. ຄຸ້ມຄອງແຮງງານໃຫ້ມີຄວາມປອດໄພ ແລະ ມີຄວາມສະດວກ ໃນການເຄື່ອນໄຫວທຸລະກິດຂອງຕົນ;
5. ດຳເນີນກອງປະຊຸມ ເພື່ອປຶກສາຫາລື ກ່ຽວກັບການລົງທຶນຂອງຕົນ;
6. ມອບ-ໂອນ, ຖອນທຶນ ຫລື ເພີ່ມທຶນຂອງວິສາຫະກິດ ແລະ ມອບໝາຍໃຫ້ຜູ້ລົງທຶນອື່ນດຳເນີນທຸລະກິດແທນເປັນການຊົ່ວຄາວ;
7. ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາກ່ຽວກັບ ການໂຈະ, ຍຸບເລີກ ຫລື ຫັນວິສາຫະກິດຂອງຕົນ ໄປສູ່ຮູບແບບວິສາຫະກິດອື່ນ;
8. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 66. ສິດໃນການວ່າຈ້າງແຮງງານ**

ສິດໃນການວ່າຈ້າງແຮງງານ ມີ ດັ່ງນີ້:

1. ເຊັນສັນຍາວ່າຈ້າງແຮງງານກັບ ນັກວິຊາການ, ຜູ້ຊ່ຽວຊານ ເພື່ອເຂົ້າມາເຮັດວຽກໃນວິສາຫະກິດຂອງຕົນ. ໃນກໍລະນີ ກິດຈະການລົງທຶນ ຫາກມີຄວາມຈຳເປັນນຳເຂົ້າຜູ້ອອກແຮງງານດ້ານຮ່າງກາຍ ແລະ ມັນສະໝອງ ເກີນອັດຕາທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ແຮງງານ ຜູ້ລົງທຶນມີສິດນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ ຕາມຄວາມເໝາະສົມ;
2. ສັບຊ້ອນ, ຈັດວາງຜູ້ອອກແຮງງານ ເຂົ້າໃນຕຳແໜ່ງງານຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງວິສາຫະກິດຕົນ;
3. ປະຕິບັດນະໂຍບາຍ ຫລື ມາດຕະການ ຕໍ່ຜູ້ອອກແຮງງານ ຢ່າງສະເໝີພາບ;
4. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ແຮງງານ ແລະ ລະບຽບກົດໝາຍອື່ນ.

**ມາດຕາ 67. ສິດໃນການຢູ່ອາໄສ ສຳລັບຜູ້ລົງທຶນຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ມີສິດອາໄສຢູ່ດິນແດນ ສປປ ລາວ ຕາມໄລຍະເວລາຂອງການລົງທຶນ. ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ມີສິດອາໄສຢູ່ດິນແດນຂອງ ສປປ ລາວ ຕາມສັນຍາວ່າຈ້າງແຮງງານ.

ຜູ້ລົງທຶນຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ, ນັກວິຊາການ, ຜູ້ຊ່ຽວຊານຕ່າງປະເທດ ໄດ້ຮັບຄວາມສະດວກໃນການເຂົ້າ-ອອກ ສປປ ລາວ ລວມທັງ ການຂໍວີຊາເຂົ້າ-ອອກຫລາຍ ເທື່ອ ຊຶ່ງແຕ່ລະຄັ້ງ ບໍ່ໃຫ້ເກີນ ຫ້າປີ.

**ມາດຕາ 68. ສິດຂອງຜູ້ລົງທຶນຕ່າງປະເທດ ໃນການສົ່ງ ທຶນ, ຊັບສິນ ແລະ ລາຍຮັບອອກໄປຕ່າງປະເທດ**

ຜູ້ລົງທຶນຕ່າງປະເທດ ມີສິດສົ່ງ ທຶນ, ຊັບສິນ ແລະ ລາຍຮັບຂອງຕົນ ເປັນຕົ້ນ ກໍາໄລຈາກການລົງທຶນ, ເງິນ ແລະຊັບສິນຕ່າງໆ ທີ່ເປັນກໍາມະສິດສ່ວນຕົວ ຫລື ຂອງວິສາຫະກິດ ອອກໄປຕ່າງປະເທດ ໂດຍຜ່ານທະນາຄານທີ່ຕັ້ງຢູ່ ສປປ ລາວ ແລະ ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ພາຍຫຼັງທີ່ໄດ້ປະຕິບັດພັນທະດ້ານພາສີ-ອາກອນ ແລະ ຄ່າທໍານຽມໃຫ້ລັດຢ່າງຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 69. ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນ ມີພັນທະຕົ້ນຕໍ ດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີຂອງລາວ ໃນກໍລະນີທີ່ຈໍາເປັນ ກໍສາມາດນໍາໃຊ້ລະບົບບັນຊີອື່ນ ທີ່ສາກົນຮັບຮູ້ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການການເງິນຂອງ ສປປ ລາວ;
2. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການ ຢ່າງຄົບຖ້ວນ ແລະ ທັນເວລາ;
3. ປະຕິບັດລະບອບ ປະກັນໄພ ແລະ ປະກັນສັງຄົມ ຕໍ່ຜູ້ອອກແຮງງານໃນວິສາຫະກິດຂອງຕົນ ຕາມລະບຽບກົດໝາຍ, ສົ່ງເສີມການນໍາໃຊ້ແຮງງານລາວ, ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຢີໃຫ້ແກ່ຜູ້ອອກແຮງງານລາວ;
4. ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ ໂດຍສະເພາະແມ່ນອົງການຈັດຕັ້ງກໍາມະບານ;
5. ປະສານງານກັບອົງການປົກຄອງທ້ອງຖິ່ນ ໃນການເຄື່ອນໄຫວວຽກງານທຸລະກິດ, ທົດແທນຄ່າເສຍຫາຍທີ່ທຸລະກິດຂອງຕົນໄດ້ກໍ່ຂຶ້ນ, ປະກອບສ່ວນ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ພັດທະນາທ້ອງຖິ່ນ ໃນເຂດໂຄງການຂອງຕົນ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 70. ພັນທະໃນການປົກປັກຮັກສາສິ່ງແວດລ້ອມ**

ຜູ້ລົງທຶນ ມີພັນທະໃນການ ປົກປັກຮັກສາ, ພັດທະນາສິ່ງແວດລ້ອມ, ຮັບປະກັນບໍ່ໃຫ້ການດໍາເນີນທຸລະກິດ ມີຜົນກະທົບຢ່າງຫລວງຫລາຍຕໍ່ສາທາລະນະຊົນ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສຸຂະພາບຂອງຜູ້ອອກແຮງງານ. ໃນກໍລະນີທີ່ເກີດບັນຫາດ້ານສິ່ງແວດລ້ອມ ຜູ້ລົງທຶນ ມີພັນທະປະຕິບັດມາດຕະການທີ່ຈໍາເປັນ ເພື່ອແກ້ໄຂສະພາບດັ່ງກ່າວ ຢ່າງທັນການຕາມລະບຽບກົດໝາຍ.

## ພາກທີ VI

## ຂໍ້ຫ້າມ

**ມາດຕາ 71. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ ແລະການຈັດຕັ້ງ ມີການກະທຳ ດັ່ງນີ້:

1. ອະນຸມັດ, ດຳເນີນທຸລະກິດທີ່ຫວງຫ້າມ ຫຼື ບໍ່ຖືກຕ້ອງ ຕາມລະບຽບກົດໝາຍ;
2. ຂັດຂວາງການສົ່ງເສີມການລົງທຶນ ຢູ່ ສປປ ລາວ ໃນທຸກຮູບການ;
3. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 72. ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານ ມີການກະທຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ຮັບສິນບົນຈາກຜູ້ລົງທຶນ ຫຼື ຜູ້ທີ່ຫວັງຜົນປະໂຫຍດຈາກການລົງທຶນ;
3. ເປີດເຜີຍເອກະສານລັບຂອງຊາດ, ຂອງລັດຖະການ ແລະ ຂອງຜູ້ລົງທຶນ;
4. ແກ່ຍາວເວລາໃນການພິຈາລະນາ ເອກະສານຕ່າງໆ ໂດຍບໍ່ມີເຫດຜົນ ຫຼື ກົດໜ່ວງເອກະສານດັ່ງກ່າວ ຂອງຜູ້ລົງທຶນ;
5. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 73. ຂໍ້ຫ້າມສຳລັບຜູ້ລົງທຶນ**

ຫ້າມຜູ້ລົງທຶນ ມີການກະທຳ ດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະພະນັກງານ ຮັບຜິດຊອບວຽກງານທີ່ກ່ຽວຂ້ອງ;
2. ຫລົບຫລີກການປະຕິບັດພັນທະ, ເຊື່ອງອຳ ລາຍຮັບ, ຜົນກຳໄລ ລວມທັງ ຕົວເລກການເສຍພາສີ-ອາກອນ;
3. ໃສ່ຮ້າຍປ້າຍສີ ຫລືໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;
4. ມີການກະທຳອື່ນທີ່ເປັນຂໍ້ຫ້າມ ຊຶ່ງໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ VII
# ການໂຈະ, ປ່ຽນແປງ, ຍົກເລີກ ແລະ ສິ້ນສຸດ ການລົງທຶນ

**ມາດຕາ 74. ການໂຈະການລົງທຶນ**

ການລົງທຶນ ຈະຖືກໂຈະໂດຍອົງການທີ່ອອກໃບທະບຽນ:

- ຕາມການສະເໜີຂອງຜູ້ລົງທຶນ ໃນກໍລະນີທີ່ປະສົບບັນຫາດ້ານທຸລະກິດ;

- ຕາມການສະເໜີຂອງ ຂະແໜງການທີ່ກ່ຽວຂ້ອງ ຫຼື ຕາມຄໍາເຫັນຂອງອົງການທີ່ອອກໃບທະບຽນ ໃນກໍລະນີ ທີ່ທຸລະກິດມີຜົນກະທົບຢ່າງຮ້າຍແຮງ ຕໍ່ສະພາບແວດລ້ອມ, ເສດຖະກິດ-ສັງຄົມ ຫຼື ດໍາເນີນທຸລະກິດບໍ່ສອດຄ່ອງກັບລະບຽບກົດໝາຍ.

ການໂຈະການລົງທຶນ ຕ້ອງມີກໍານົດເວລາອັນແນ່ນອນ ເພື່ອຊອກຫາວິທີແກ້ໄຂ ຫຼື ປັບປຸງໃຫ້ຄືນສູ່ສະພາບປົກກະຕິ. ໃນກໍລະນີ ທີ່ບໍ່ສາມາດແກ້ໄຂໄດ້ ກິດຈະການນັ້ນ ກໍຈະຖືກຍຸບເລີກ ຕາມກົດໝາຍວ່າດ້ວຍ ວິສາຫະກິດ.

### ມາດຕາ 75. ການປ່ຽນແປງການລົງທຶນ

ການລົງທຶນ ຈະຖືກປ່ຽນແປງດ້ວຍວິທີການຕ່າງໆ ເຊັ່ນ: ການປ່ຽນ ວັດຖຸປະສົງໃນການດໍາເນີນກິດຈະການ, ຜູ້ຖືຮຸ້ນ, ຜູ້ຕາງໜ້າທາງດ້ານກົດໝາຍ, ທຶນຈົດທະບຽນ ຕາມການສະເໜີຂອງຜູ້ລົງທຶນ ໂດຍແມ່ນ ອົງການທີ່ອອກໃບທະບຽນນັ້ນ ເປັນຜູ້ພິຈາລະນາ.

### ມາດຕາ 76. ການຍົກເລີກການລົງທຶນ

ການລົງທຶນ ຈະຖືກຍົກເລີກ ໂດຍອົງການທີ່ອອກໃບທະບຽນ:

- ຕາມການສະເໜີຂອງຄູ່ສັນຍາ;
- ຕາມການສະເໜີຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ໃນກໍລະນີ ທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ລະບຽບກົດໝາຍ;
- ເມື່ອມີການຖອນໃບທະບຽນວິສາຫະກິດ ຫຼື ໃບທະບຽນສໍາປະທານ.

ຂັ້ນຕອນການພິຈາລະນາການຍົກເລີກການລົງທຶນ ມີ ດັ່ງນີ້:

1. ອົງການທີ່ອອກໃບທະບຽນ ຈະເປັນຜູ້ອອກແຈ້ງການເຕືອນຜູ້ລົງທຶນ ໃນກໍລະນີທີ່ເຫັນວ່າ ມີການດໍາເນີນທຸລະກິດຂັດກັບສັນຍາສໍາປະທານ, ລະບຽບກົດໝາຍ, ມີຜົນກະທົບຢ່າງ ຮ້າຍແຮງຕໍ່ສິ່ງແວດລ້ອມ ເພື່ອໃຫ້ແກ້ໄຂ ແລະ ປັບປຸງ ພາຍໃນກໍານົດເວລາເກົ້າສິບວັນ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ ພ້ອມທັງເຮັດບົດບັນທຶກກັບຜູ້ລົງທຶນ;
2. ຖ້າຫາກຜູ້ລົງທຶນບໍ່ໄດ້ແກ້ໄຂ ແລະປັບປຸງ ພາຍໃນກໍານົດເວລາດັ່ງກ່າວແລ້ວ ອົງການທີ່ອອກໃບທະບຽນ ກໍຈະອອກແຈ້ງການເຕືອນເປັນຄັ້ງທີສອງ ເພື່ອໃຫ້ຜູ້ລົງທຶນຕ້ອງແກ້ໄຂ ແລະ ປັບປຸງ ພາຍໃນກໍານົດເວລາ ຫົກສິບ ວັນ;
3. ຫລັງຈາກນັ້ນ ຖ້າຫາກຜູ້ລົງທຶນ ຍັງບໍ່ປະຕິບັດພາຍໃນກໍານົດເວລາດັ່ງກ່າວ ອົງການທີ່ອອກໃບທະບຽນ ຈຶ່ງອອກແຈ້ງການຍົກເລີກການດໍາເນີນກິດຈະການຂອງຜູ້ລົງທຶນ ແລະແຈ້ງໃຫ້ສື່ມວນຊົນ ເພື່ອອອກຂ່າວ ພ້ອມທັງ ນໍາໃຊ້ມາດຕະການທີ່ຈໍາເປັນຕໍ່ຜູ້ລົງທຶນຕາມລະບຽບກົດໝາຍ.

### ມາດຕາ 77. ການສິ້ນສຸດການລົງທຶນ

ການລົງທຶນ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ໝົດອາຍຸການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນໃບທະບຽນສຳປະທານ ຫຼື ໂຄງການລົງທຶນໄດ້ປະຕິບັດສຳເລັດແລ້ວ;
2. ມີການຖອນ ຫລື ຍົກເລີກໃບທະບຽນສຳປະທານ ຫຼື ໃບທະບຽນວິສາຫະກິດ;
3. ມີການຄວບເຂົ້າກັນ ຫຼື ແຍກຕົວອອກຈາກກັນ ຂອງກິດຈະການລົງທຶນ ເພື່ອສ້າງເປັນນິຕິບຸກຄົນອື່ນ;
4. ຍຸບເລີກ ຕາມການສະເໜີຂອງຜູ້ລົງທຶນ ຫຼື ຄູ່ສັນຍາ ໂດຍມີການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງ;
5. ຍົກເລີກຕາມຄຳຕັດສິນຂອງສານ ຫຼື ລົ້ມລະລາຍ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 78. ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບການລົງທຶນ ດຳເນີນດ້ວຍຮູບການ ດັ່ງນີ້:

1. ການແກ້ໄຂດ້ວຍການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງ.

### ມາດຕາ 79. ການແກ້ໄຂດ້ວຍການປະນີປະນອມກັນ

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບການລົງທຶນ ຄູ່ກໍລະນີ ຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງນັ້ນດ້ວຍການປຶກສາຫາລື ແລະ ປະນີປະນອມນຳກັນ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ.

### ມາດຕາ 80. ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນ ຫຼື ບໍ່ສາມາດໄກ່ເກ່ຍກັນໄດ້ ຄູ່ກໍລະນີກໍມີສິດຮ້ອງຂໍໃຫ້ຂະແໜງການແຜນການ ແລະ ການລົງທຶນ ຫລື ຂະແໜງການອຸດສາຫະກຳ ແລະການຄ້າ ຫຼື ຂະແໜງການອື່ນ ທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂທາງດ້ານບໍລິຫານ ຕາມພາລະບົດບາດຂອງຕົນ.

### ມາດຕາ 81. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ເມື່ອຄູ່ກໍລະນີ ບໍ່ສາມາດປະນີປະນອມກັນ ຫຼື ບໍ່ສາມາດແກ້ໄຂທາງດ້ານບໍລິຫານໄດ້ແລ້ວ ກໍມີສິດຮ້ອງຂໍໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາ ແກ້ໄຂຕາມລະບຽບກົດໝາຍ ບົນພື້ນຖານການຕົກລົງເຫັນດີນຳກັນ.

**ມາດຕາ 82. ການຮ້ອງຟ້ອງ**

ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນຍັງບໍ່ໄດ້ຮັບຄວາມຍຸຕິທຳໃນການແກ້ໄຂຂໍ້ຂັດແຍ່ງຈາກອົງການທີ່ກ່ຽວຂ້ອງ ຫລື ໄດ້ຮັບຄວາມເສຍຫາຍເນື່ອງຈາກການລົງທຶນໃນກິດຈະການໃດໜຶ່ງແລ້ວ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອທຳການພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

ສຳລັບ ຂໍ້ຂັດແຍ່ງຂອງການລົງທຶນ ທີ່ໄດ້ມີສັນຍາກັບລັດ ໃຫ້ປະຕິບັດຕາມວິທີການແກ້ໄຂຂໍ້ຂັດແຍ່ງທີ່ໄດ້ກຳນົດໄວ້ໃນສັນຍາ.

# ພາກທີ IX
# ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 83. ຫລັກການຂອງການແບ່ງຂັ້ນຄຸ້ມຄອງ**

ການຄຸ້ມຄອງການລົງທຶນ ໃຫ້ປະຕິບັດຕາມຫລັກການ ດັ່ງນີ້:

- ແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນຫຼາຍຂຶ້ນ, ເພີ່ມຄວາມຮັບຜິດຊອບໃຫ້ສູນກາງໃນການຄຸ້ມຄອງມະຫາພາກ, ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຂອງທ້ອງຖິ່ນ;
- ອົງການໃດ, ຂັ້ນໃດ ເປັນຜູ້ອອກໃບທະບຽນ ແມ່ນ ອົງການນັ້ນ ຂັ້ນນັ້ນ ເປັນຜູ້ຄຸ້ມຄອງ, ຕິດຕາມ, ກວດກາ ປະເມີນຜົນກ່ຽວກັບ ການລົງທຶນ ໂດຍປະສານສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລ້ວລາຍງານໃຫ້ຂັ້ນເທິງ ຂອງຕົນຢ່າງເປັນປົກກະຕິ;
- ການລົງທຶນໃນຂະແໜງການໃດ ແມ່ນ ຂະແໜງການນັ້ນ ເປັນເຈົ້າການຄຸ້ມຄອງ ທາງດ້ານວິຊາການ ໂດຍປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ຕາມລະບຽບກົດໝາຍ.

**ມາດຕາ 84. ການແບ່ງຂັ້ນຄຸ້ມຄອງການລົງທຶນ ລະຫວ່າງທ້ອງຖິ່ນ ແລະສູນກາງ**

ທ້ອງຖິ່ນເປັນຜູ້ອອກໃບທະບຽນ ແລະ ຄຸ້ມຄອງການລົງທຶນ ເປັນຕົ້ນຕໍ, ສໍາລັບສູນກາງ ແມ່ນອອກໃບທະບຽນ ແລະ ຄຸ້ມຄອງບັນດາກິດຈະການທີ່ມີ ລັກສະນະຍຸດທະສາດ ເປັນຕົ້ນ ກິດຈະການທີ່ພົວພັນເຖິງຫລາຍຂະແໜງການ ຫລື ຫລາຍທ້ອງຖິ່ນ, ກິດຈະການທີ່ນໍາໃຊ້ເຕັກໂນໂລຢີສູງ, ສະຖາບັນການເງິນ, ການປະກັນໄພ, ໂທລະຄົມມະນາຄົມ, ການບິນ, ສິດຂອງລັດ, ພະລັງງານ, ແຮ່ທາດ, ນໍ້າມັນດິບ, ອາຍ ແກັສ ແລະອື່ນໆ ຕາມການກໍານົດຂອງລັດຖະບານ ໂດຍມີການສົມທົບລະຫວ່າງ ອົງການທີ່ອອກໃບທະບຽນ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ມີໜ້າທີ່ເຂົ້າຮ່ວມ ຕາມພາລະບົດບາດຂອງຕົນ ໃນການຄຸ້ມຄອງກິດຈະການລົງທຶນ ທີ່ສູນກາງອອກໃບທະບຽນ ຊຶ່ງຕັ້ງຢູ່ທ້ອງຖິ່ນຂອງຕົນ.

ການແບ່ງຂັ້ນຄຸ້ມຄອງ ທີ່ໄດ້ກໍານົດໄວ້ສະເພາະໃນກົດໝາຍທີ່ກ່ຽວຂ້ອງແລ້ວ ໃຫ້ປະຕິບັດຕາມກົດໝາຍດັ່ງກ່າວ.

## ໝວດທີ 2
## ອົງການຄຸ້ມຄອງ

### ມາດຕາ 85. ອົງການຄຸ້ມຄອງການລົງທຶນ

ລັດຖະບານ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການຄຸ້ມຄອງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງການລົງທຶນ ປະກອບດ້ວຍ:

1. ຂະແໜງການແຜນການ ແລະການລົງທຶນ;
2. ຂະແໜງການອຸດສາຫະກໍາ ແລະ ການຄ້າ;
3. ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

### ມາດຕາ 86. ສິດ ແລະ ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ອຸດສາຫະກໍາ ແລະການຄ້າ

ໃນການຄຸ້ມຄອງການລົງທຶນ ກະຊວງແຜນການ ແລະ ການລົງທຶນ ແລະ ອຸດສາຫະກໍາ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ ແລະ ສັງລວມໂຄງການ ຫຼື ກິດຈະການຮຽກການລົງທຶນ ເພື່ອສະເໜີໃຫ້ລັດຖະບານພິຈາລະນາ;

2. ໂຄສະນາ, ເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນ ແລະ ສະໜອງຂໍ້ມູນຂ່າວສານ ລວມທັງ ໂຄງການ ຫຼື ກິດຈະການຮຽກການລົງທຶນ ເພື່ອດຶງດູດການລົງທຶນ;
3. ແນະນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການອື່ນ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນ;
4. ຊຸກຍູ້, ສົ່ງເສີມ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນບັນດາໂຄງການ, ກິດຈະການລົງທຶນ ໃນຂອບເຂດທົ່ວປະເທດ;
5. ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃນການດຳເນີນການບໍລິການການລົງທຶນປະຕູດຽວ;
6. ຄົ້ນຄວ້າພິຈາລະນາ ອອກ, ໂຈະ, ຖອນ, ຍົກເລີກ ໃບທະບຽນ ຫຼື ສັນຍາ ຕາມພາລະບົດບາດ ຂອງຕົນ ດ້ວຍການເຫັນດີຂອງລັດຖະບານ;
7. ກໍ່ສ້າງ, ບຳລຸງ, ຍົກລະດັບ ພະນັກງານ ກ່ຽວກັບການລົງທຶນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນ;
9. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 87. ສິດ ແລະໜ້າທີ່ ຂອງພະແນກແຜນການ ແລະການລົງທຶນ ແລະ ອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນ**

ໃນການຄຸ້ມຄອງການລົງທຶນ ພະແນກແຜນການ ແລະ ການລົງທຶນ ແລະ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ, ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ ແລະ ສ້າງໂຄງການ ຫຼື ກິດຈະການຮຽກການລົງທຶນໃນທ້ອງຖິ່ນຂອງຕົນ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການລົງທຶນ, ສະໜອງຂໍ້ມູນຂ່າວສານ ລວມທັງ ໂຄງການ ຫຼື ກິດຈະການຮຽກການລົງທຶນ ແລະ ອຳນວຍຄວາມສະດວກໃຫ້ແກ່ ຜູ້ລົງທຶນ ຕາມຄວາມຮັບຜິດຊອບຂອງຕົນ;
3. ແນະນຳ, ຕິດຕາມ ແລະ ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນທ້ອງຖິ່ນຂອງຕົນໃນການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບການສົ່ງເສີມການລົງທຶນ;
4. ຄົ້ນຄວ້າພິຈາລະນາ ອອກ, ໂຈະ, ຖອນ, ຍົກເລີກ ໃບທະບຽນ ຫຼື ສັນຍາ ຕາມພາລະບົດບາດ ຂອງຕົນ ດ້ວຍການເຫັນດີຂອງອົງການປົກຄອງທ້ອງຖິ່ນ;
5. ຈັດຕັ້ງປະຕິບັດການບໍລິການການລົງທຶນປະຕູດຽວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;

6. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານການລົງທຶນ ຕາມການມອບໝາຍ ຂອງຂັ້ນເທິງ;
7. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນ ຕໍ່ ຂັ້ນເທິງ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 88. ສິດ ແລະໜ້າທີ່ ຂອງຫ້ອງການແຜນການ ແລະການລົງທຶນ ແລະ ອຸດສາຫະກໍາ ແລະການຄ້າ ເມືອງ, ເທດສະບານ**

ໃນການຄຸ້ມຄອງການລົງທຶນ ຫ້ອງການແຜນການ ແລະ ການລົງທຶນ ແລະ ອຸດສາຫະກໍາ ແລະ ການຄ້າ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ, ລະບຽບກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນ ແລະ ໂຄງການ ຫຼື ກິດຈະການຮຽກການລົງທຶນ ໃນທ້ອງຖິ່ນຂອງຕົນ;
2. ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການລົງທຶນ, ສະໜອງຂໍ້ມູນຂ່າວສານ ລວມທັງ ໂຄງການ ຫຼື ກິດຈະການຮຽກການລົງທຶນ ແລະ ອໍານວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ຕາມຄວາມຮັບຜິດຊອບ ຂອງຕົນ;
3. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານຂອງຕົນ ໃນການຈັດຕັ້ງປະຕິບັດລະບຽບກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນ;
4. ຈັດຕັ້ງປະຕິບັດການບໍລິການການລົງທຶນປະຕູດຽວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສ້າງໂຄງການ ຫຼື ກິດຈະການຮຽກການລົງທຶນ ຕາມຄວາມຮັບຜິດຊອບ ຂອງຕົນແລ້ວສະເໜີຂັ້ນເທິງທີ່ກ່ຽວຂ້ອງ ພິຈາລະນາ;
6. ເກັບກໍາຂໍ້ມູນກ່ຽວກັບການລົງທຶນ ລວມທັງ ກິດຈະການການລົງທຶນຕ່າງໆ ຢູ່ໃນທ້ອງຖິ່ນຂອງຕົນ;
7. ຊຸກຍູ້, ສົ່ງເສີມ ແລະ ແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນການລົງທຶນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ສະຫຼຸບ ແລະ ລາຍງານກ່ຽວກັບວຽກງານການລົງທຶນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 89. ຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເປັນອົງການຄຸ້ມຄອງການລົງທຶນ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຂອງຕົນ, ສ້າງຕັ້ງຫ້ອງ

ການບໍລິການການລົງທຶນປະຕູດຽວ ເພື່ອດຶງດູດ ແລະ ສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ຂອງຕົນ.

ລະບຽບການຄຸ້ມຄອງການລົງທຶນຂອງຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໄດ້ກໍານົດໄວ້ຕ່າງຫາກ.

**ມາດຕາ 90. ສິດ ແລະໜ້າທີ່ ຂອງຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ**

ໃນການຄຸ້ມຄອງການລົງທຶນ ຄະນະບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ວາງນະໂຍບາຍສົ່ງເສີມການລົງທຶນ ໃນເຂດຂອງຕົນ;
2. ຄົ້ນຄວ້າ ແລະ ສ້າງໂຄງການ ຫຼື ກິດຈະການຮຽກການລົງທຶນ ເພື່ອມາລົງທຶນໃນເຂດຂອງຕົນ;
3. ປະຕິບັດນະໂຍບາຍ ສົ່ງເສີມການລົງທຶນ ເພື່ອດຶງດູດຜູ້ລົງທຶນທັງພາຍໃນ ແລະ ຕ່າງປະເທດ ມາລົງທຶນໃນເຂດຂອງຕົນ;
4. ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ຜູ້ລົງທຶນ ໃນການດໍາເນີນທຸລະກິດຢູ່ເຂດຂອງຕົນ;
5. ດໍາເນີນການເກັບພາສີ-ອາກອນ, ຄ່າທໍານຽມ, ຄ່າບໍລິການ, ຄ່າເຊົ່າ ແລະ ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ແລະ ລະບຽບການພາຍໃນເຂດ;
6. ຄຸ້ມຄອງ ແລະນໍາໃຊ້ງົບປະມານ ໃຫ້ສອດຄ່ອງກັບສັນຍາ ແລະລະບຽບກົດໝາຍ;
7. ພົວພັນ, ປະສານງານກັບທຸກພາກສ່ວນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອບໍລິຫານເຂດຂອງຕົນໃຫ້ມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
8. ຈັດວາງລະບົບການປົກປັກຮັກສາສິ່ງອໍານວຍຄວາມສະດວກ ແລະ ພື້ນຖານໂຄງລ່າງ, ຮັບປະກັນຄວາມປອດໄພ ແລະ ສິ່ງແວດລ້ອມ ພາຍໃນເຂດ;
9. ສະຫຼຸບ ແລະ ລາຍງານວຽກງານການລົງທຶນ ໃນເຂດຂອງຕົນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 91. ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ພາກສ່ວນອື່ນ**

ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ຄຸ້ມຄອງ, ສົ່ງເສີມການລົງທຶນ ຕາມພາລະບົດບາດຂອງຕົນ.

ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໃນການຄຸ້ມຄອງ, ຕິດຕາມການລົງທຶນ ໃນກິດຈະການຕ່າງໆ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທໍາຂອງປະຊາຊົນລາວບັນດາເຜົ່າ, ຂອງລັດ, ຂອງຜູ້ລົງທຶນ, ອໍານວຍຄວາມສະດວກດ້ານຕ່າງໆ ໃຫ້ແກ່ການລົງທຶນ ລວມທັງ ຮັບປະກັນ

ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ພາຍໃນເຂດທ້ອງຖິ່ນຂອງຕົນ ແລະ ລາຍງານການເຄື່ອນໄຫວກ່ຽວກັບການລົງທຶນ ໃຫ້ຂັ້ນເທິງ.

## ໝວດທີ 3
## ການກວດກາ

**ມາດຕາ 92. ອົງການກວດກາການລົງທຶນ**

ອົງການກວດກາການລົງທຶນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 85 ຂອງກົດຫມາຍສະບັບນີ້.

**ມາດຕາ 93. ເນື້ອໃນການກວດກາ**

ທຸກການເຄື່ອນໄຫວຂອງບັນດາກິດຈະການການລົງທຶນ ລ້ວນແຕ່ໄດ້ຮັບການຄຸ້ມຄອງ, ຕິດຕາມ ແລະ ກວດກາ ຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດ ສັນຍາການລົງທຶນ;
2. ກວດກາການປະຕິບັດ ຂັ້ນຕອນຂອງການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ;
3. ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ລວມທັງ ຊັບສິນຂອງປະຊາຊົນ, ຂອງລັດ ແລະ ຜູ້ລົງທຶນ;
4. ກວດກາ ການປະຕິບັດ ລະບຽບກົດໝາຍທີ່ກ່ຽວຂ້ອງ;
5. ກວດກາ ການປະຕິບັດມາດຕະການຄວາມປອດໄພ ຂອງແຮງງານ.

ອົງການກວດກາການລົງທຶນ ມີສິດສະເໜີມາດຕະການແກ້ໄຂຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ໃນກໍລະນີທີ່ພົບເຫັນ ການລະເມີດລະບຽບກົດໝາຍ ກ່ຽວກັບການລົງທຶນ.

**ມາດຕາ 94. ປະເພດການກວດກາ**

ການກວດກາ ມີສອງ ປະເພດ ດັ່ງນີ້:

1. ການກວດກາພາຍໃນ ຊຶ່ງແມ່ນອົງການຄຸ້ມຄອງ ແລະ ກວດກາການລົງທຶນ ທີ່ໄດ້ກຳນົດໄວ້ໃນມາດຕາ 85 ແລະ 92 ຂອງກົດໝາຍສະບັບນີ້;
2. ການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ໃນການກວດກາການຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ຕາມ ສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

### ມາດຕາ 95. ຮູບການການກວດກາ

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍສອງຄັ້ງຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາ ຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາ ຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 96. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນທີ່ມີປະສິດທິຜົນ, ມີຄວາມສຳຄັນ ຕໍ່ການພັດທະນາເສດຖະກິດ-ສັງຄົມ, ການດຶງດູດ ແລະ ການຊຸກຍູ້ການລົງທຶນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບກົດໝາຍ.

### ມາດຕາ 97. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການສົ່ງເສີມການລົງທຶນ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫລື ດຳເນີນຄະດີ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ ຕາມລະບຽບກົດໝາຍ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 98. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

**ມາດຕາ 99. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ຫົກສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດຫມາຍວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສະບັບ ເລກທີ 10/ສພຊ ລົງວັນທີ 22 ຕຸລາ 2004 ແລະ ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນຂອງ ຕ່າງປະເທດ ສະບັບເລກທີ 11/ສພຊ ລົງວັນທີ 22 ຕຸລາ 2004.

ຜົນປະໂຫຍດທີ່ບັນດາວິສາຫະກິດ ໄດ້ຮັບພາຍໃຕ້ກົດໝາຍສະບັບກ່ອນ ຫຼື ສັນຍາ ທີ່ໄດ້ ເຊັນກັບລັດກ່ອນໜ້ານີ້ ແມ່ນ ບໍ່ມີການປ່ຽນແປງ. ໃນກໍລະນີທີ່ ບັນດາວິສາຫະກິດດັ່ງກ່າວ ຫາກມີ ຈຸດປະສົງຕ້ອງການຮັບນະໂຍບາຍສົ່ງເສີມການລົງທຶນ ຕາມກົດໝາຍສະບັບນີ້ ກໍມີສິດສະເໜີຕໍ່ຂະ ແໜງການທີ່ກ່ຽວຂ້ອງ ແລ້ວຂະແໜງການດັ່ງກ່າວ ກໍແຈ້ງໃຫ້ຜູ້ລົງທຶນ ປະຕິບັດໄດ້ໃນທັນໃດ.

**ປະທານສະພາແຫ່ງຊາດ**